ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຂີດຄວາມສາມາດຂອງພະຍາບານວິຊາຊີບໃນ ສປປ ລາວ

# (ສະບັບປັບປຸງ)

# National Competencies for Licensed Nurses in Lao P.D.R. (Revised Version)

ຈັດພິມໂດຍ: ບອດພະຍາບານແລະຜະດຸງຄັນ ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສະໜັບສະໜູນໂດຍ: ອົງການ ຮ່ວມມືສາກົນ ຍີ່ປຸ່ນ(JICA)

ພຶດສະພາ 2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0104 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 26 OCT 2021

# ຂໍ້ຕົກລົງ
## ວ່າດ້ວຍ ຂີດຄວາມສາມາດຂອງພະຍາບານວິຊາຊີບ ໃນ ສປປ ລາວ
## (ສະບັບປັບປຸງ)

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວກະຊວງສາທາລະນະສຸກ, ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ແຜນພັດທະນາຊັບພະຍາກອນມະນຸດ ຂອງກະຊວງສາທາລະນະສຸກ;
- ອີງຕາມ ໜັງສືສະເໜີຂອງ ກົມການສຶກສາ ສາທາລະນະສຸກ ສະບັບເລກທີ 1306/ກສສ, ລົງວັນທີ 20 ຕຸລາ 2021.

### ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

**ມາດຕາ 1** ຮັບຮອງ ແລະ ໃຫ້ນຳໃຊ້ຂີດຄວາມສາມາດຂອງພະຍາບານວິຊາຊີບໃນ ສປປ ລາວ (ສະບັບປັບປຸງ) ສະບັບນີ້.

**ມາດຕາ 2** ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ເປັນໃຈກາງປະສານງານ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍໃນການຈັດຕັ້ງປະຕິບັດຂີດຄວາມສາມາດຂອງພະຍາບານວິຊາຊີບໃນ ສປປ ລາວ ສະບັບນີ້ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3** ໃຫ້ກົມຈັດຕັ້ງ ແລະ ພະນັກງານ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ໃຜລາວ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ

**ບ່ອນນຳສົ່ງ:**

1. ຫ້ອງການສະພາຄຸ້ມຄອງວິຊາຊີບ 02 ສະບັບ;
2. ກົມຈັດຕັ້ງ ແລະ ພະນັກງານ 03 ສະບັບ;
3. ພາກສ່ວນທີ່ກ່ຽວຂ້ອງ ບ່ອນລະ 01 ສະບັບ;
4. ເກັບຮັກສາໄວ້ 01 ສະບັບ.

ສຈ. ດຣ. ປອນເມກ ດາລາລອຍ

# ສາລະບານ

ຂໍ້ຕົກລົງວ່າດ້ວຍຂີດຄວາມສາມາດຂອງພະຍາບານວິຊາຊີບ ໃນ ສປປ ລາວ……………………………i

ຄຳນຳ……………………………………………………………………………..…..……….iii

ຄວາມເປັນມາໃນການປັບປຸງຂີດຄວາມສາມາດພະຍາບານວິຊາຊີບລາວ…………………………….……….iv

ຈຸດປະສົງ……………………………………………………………………………………….v

ເປົ້າໝາຍ………………………………………………………………………………………vi

ຂະບວນການສ້າງ……………………………………………………………………………..vi

ສະຫຼຸບຫຍໍ້………………………………………………………………………………..……vii

ຄຳຂອບໃຈ……………………………………………………………………..………viii

ອະທິບາຍຄຳສັບ…………………………………………………………………………..……1

ພາກທີ່ 1. ຂອບເຂດຂີດຄວາມສາມາດຫຼັກຂອງພະຍາບານວິຊາຊີບ ປະກອບມີ ………………….…1

ພາກທີ່ 2. ລະດັບຂີດຄວາມສາມາດພະຍາບານວິຊາຊີບ ..…………………………………….-1-

ເອກະສານອ້າງອີງ

ເອກະສານຊ້ອນທ້າຍ 1. ລາຍຊື່ຜູ້ປະກອບສ່ວນ

ເອກະສານຊ້ອນທ້າຍ 2. ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງບຸກຄະລາກອນຂອງສະພາຄຸ້ມຄອງວິຊາຊີບ ປິ່ນປົວ (ເລກທີ່ 094/ສທ, ລົງວັນທີ່ 21 ພຶດສະພາ 2018)

ເອກະສານຊ້ອນທ້າຍ 3. ຂໍ້ຕົກລົງ ວ່າດ້ວຍການປັບປຸງການແຕ່ງຕັ້ງບຸກຄະລາກອນຂອງ ຄະນະກຳມະການວິຊາ ຊີບປິ່ນປົວ (ບອດ) ການພະຍາບານ ແລະ ຜະດຸງຄັນ (ເລກທີ່ 190/ສອປ, ລົງວັນທີ່ 23 ຕຸລາ 2019)

## ຄຳນຳ

ຂີດຄວາມສາມາດສາມາດສະບັບປັບປຸງ ປີ2021 ສະບັບນີ້, ຄະນະກາມະການ ວິຊາຊີບປິ່ນປົວການພະຍາບານ ແລະ ຜະດຸງຄັນ(Nursing and Midwifery Board), ທີມງານໂຄງການພັດທະນາ ແລະ ຮັບປະກັນຄຸນນະພາບວິຊາຊີບປິ່ນປົວ ແບບຍືນຍົງ(ພຄວປ) (JICA) ແລະ ອົງການສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ UNFPA ຮ່ວມກັນ ປັບປຸງ ແນໃສ່ ພັດທະນາຂີດຄວາມສາມາດຂອງພະຍາບານໃນ ສປປລາວ ສະແດງອອກເວລາສະໜອງການບໍລິການແບບມືອາຊີບ ໃຫ້ແກ່ ຜູ້ຮັບບໍລິການທັງພາຍໃນປະເທດອາຊຽນ ແລະ ສາກົນ.

ເປົ້າໝາຍ ການປັບປຸງຂີດຄວາມສາມາດສາມາດດັ່ງກ່າວນີ້ ເນັ້ນເຖິງການພັດທະນາພະຍາບານໃຫ້ມີຂີດຄວາມສາມາດສະແດງອອກໃນການປະຕິບັດການພະຍາບານ 3 ຂົງເຂດຄື 1. ຂົງເຂດສະຕິປັນຍາ (Cognitive Domain), 2. ຂົງເຂດ ເຈຕະຄະຕິ (Affective Domain) ແລະ ຂົງເຂດ ທັກສະ (Psychomotor Domain) ຊຶ່ງ ຄະນະບໍລິຫານບອດການພະຍາບານ ແລະ ຜະດຸງຄັນ ໄດ້ກໍາໜົດຂົງເຂດຂີດຄວາມສາມາດຫລັກໃຫ້ສອດຄ່ອງກັບ ຂີດຄວາມສາມາດຫລັກຂອງພະຍາບານອາຊຽນ 5 ດ້ານເຊັ່ນ: 1)ດ້ານກົດໝາຍ, ກົດລະບຽບ, ຈັນຍາທໍາ ແລະ ຈັນຍາບັນ ວິຊາຊີບການປະຕິບັດ ການພະຍາບານ (Professional, Legal and Ethical Nursing Practice); 2)ດ້ານການປະຕິບັດວິຊາຊີບ ການພະຍາບານ (Professional Nursing Practice), 3)ດ້ານຄວາມເປັນຜູ້ນໍາ ແລະ ການຄຸ້ມຄອງການພະຍາບານ (Leadership and Nursing Management), 4)ດ້ານການຄົ້ນຄວ້າທາງການພະຍາບານ (Nursing Research); 5) ດ້ານວິຊາຊີບ ແລະ ການພັດທະນາຕົນເອງ (Professional and Personal Development).

ຄະນະບໍລິຫານພະຍາບານ ແລະ ຜະດຸງຄັນຫວັງຢ່າງຍິ່ງວ່າພະຍາບານລາວມີຄວາມຈາເປັນຕ້ອງເຂົ້າໃຈ ແລະ ເອົາໃຈໃສ່ໃນການພັດທະນາພັດທະນາຕົນເອງໃຫ້ມີຂີດຄວາມສາມາດ ພະຍາບານວິຊາຊີບໃຫ້ມີລະດັບສູງຂຶ້ນຢ່າງຕໍ່ເນື່ອງ ເພື່ອກຽມຕົນເອງໃຫ້ການບໍລິການ ສຸຂະພາບປະຊາຊົນ ໃນຍຸກການປ່ຽນແປງທາງສັງຄົມ ວັດທະນະທໍາ ແລະ ຄວາມກ້າວໜ້າທາງເທັກໂນໂລຊີດ້ານການແພດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ, ພ້ອມທັງຖືກຍອມຮັບໃນຄຸນຄ່າການບໍລິການພະຍາບານວິຊາຊີບສູງຂຶ້ນໃນລະບົບສຸຂະພາບອີກດ້ວຍ.

**ຄະນະກໍາມະການວິຊາຊີບປິ່ນປົວ ການ ພະຍາບານ ແລະຜະດຸງຄັນ**

## ຄວາມເປັນມາໃນການປັບປຸງຂີດຄວາມສາມາດພະຍາບານວິຊາຊີບລາວ

ການປ່ຽນແປງສະພາບເສດຖະກິດ, ສັງຄົມ, ວັດທະນະທໍາ, ສິ່ງແວດລ້ອມ ແລະ ຄວາມກ້າວໜ້າດ້ານເທັກໂນໂລຊີ ມີຜົນກະທົບຕໍ່ສຸຂະພາບຂອງປະຊາຊົນທີ່ມີຄວາມຊັບຊ້ອນຫຼາຍຂຶ້ນ ບວກກັບປະຊາຊົນ ບັນດາເຜົ່າມີຄວາມເຊື່ອຖືກຮີດຄອງ ປະເພນີ ພຶດຕິກໍາສຸຂະພາບ ທີ່ແຕກຕ່າງ ຫລາກຫລາຍ ຊຶ່ງຍຶດຖືເປັນແນວປະຕິບັດໃນການດູແລສຸຂະພາບມາແຕ່ດົນນານ ຊຶ່ງມີຜົນຕໍ່ການເກີດຄວາມສ່ຽງຕໍ່ການເຈັບປ່ວຍກະທັນຫັນຈາກພະຍາດຊຶມເຊື້ອທາງລະບົບຫັນໃຈ (ໂຄວິດ-19) ທີ່ເກີດຂຶ້ນໃໝ່ ກໍາລັງລະບາດ ປະເຊີນໃນທົ່ວໂລກ, ຄຽງຄູ່ກັນນີ້, ຍັງມີພະຍາດຊໍ່າເຮື້ອ (ພະຍາດທີ່ບໍ່ຕິດແປດ Non communicable disease) ຊຶ່ງເປັນໄພງຽບເຮັດໃຫ້ເກີດການເຈັບປ່ວຍ ແລະ ເສຍຊີວິດເປັນສິ່ງທ້າທາຍຕໍ່ການ ກັນ ແລະ ຄວບຄຸມ. ການໃຫ້ບໍລິການປິ່ນປົວ ພະຍາບານກໍມີຄວາມສ່ຽງສູງຕໍ່ການຕິດເຊື້ອ ແລະ ມີຄ່າໃຊ້ຈ່າຍສູງ; ຖ້າມີການເສຍຊີວິດ ກໍ່ຕ້ອງໄດ້ຈັດການບໍລິຫານຊາກຊົບຢ່າງຖືກຕ້ອງຕາມຫຼັກວິຊາ; ສິ່ງເຫຼົ່ານີ້ ເປັນສິ່ງທ້າທາຍຕໍ່ການປະຕິບັດບົດບາດການບໍລິການສຸຂະພາບຂອງພະຍາບານ. ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນ ຕ້ອງມີການພັດທະນາຂີດຄວາມສາມາດຂອງພະຍາບານໃຫ້ສູງຂຶ້ນເຊັ່ນກັນ.

ພະຍາບານມີຈໍານວນຫຼາຍຊຶ່ງມີບົດບາດສໍາຄັນ ຕໍ່ລະບົບການບໍລິການສຸຂະພາບໃນ ສປປລາວ ແລະ ເປັນຜູ້ປະກອບສ່ວນຢ່າງຕັ້ງໜ້າໃນການຍົກສູງຄຸນນະພາບການບໍລິການສຸຂະພາບປະຊາຊົນໃນການປະຕິບັດນະໂຍບາຍ 5 ດີ 1 ພໍໃຈ ທີ່ກະຊວງສາທາລະນະສຸກວາງອອກໃຫ້ບັນລຸເປົ້າໝາຍ.

ພະຍາບານເປັນວິຊາຊີບໜຶ່ງ ໃນ 7 ສາຂາອາຊີບຕາມສັນຍາອາຊຽນວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນ ຊຶ່ງມີບົດບາດໃນການສົ່ງເສີມການຮ່ວມມືດ້ານການບໍລິການລະຫວ່າງບັນດາປະເທດສະມາຊິກອາຊຽນ ເພື່ອປັບປຸງດ້ານປະສິດທິພາບ ແລະ ຄວາມສາມາດໃນການແຂ່ງຂັນ, ຄວາມລາກຫຼາຍທາງດ້ານຄວາມສາມາດໃນການຜະລິດເພື່ອສະໜອງ ແລະ ຂະຫຍາຍການບໍລິການໃຫ້ແກ່ຜູ້ຊົມໃຊ້ທາງພາຍໃນ ແລະ ພາຍນອກອາຊຽນ, ເພື່ອລົບລ້າງສິ່ງກີດຂວາງທາງດ້ານການບໍລິການ ລະຫວ່າງປະເທດສະມາຊິກອາຊຽນ ຍອມຮັບ ການເປັນແຮງງານວິຊາຊີບພະຍາບານເສລີອາຊຽນ, ຊຶ່ງໃນແຕ່ລະປະເທດສະມາຊິກປະຊາຄົມອາຊຽນ ມີຄວາມຈໍາເປັນ ປັບປຸງກົດໝາຍ, ກົດລະບຽບ, ຈັນຍາບັນ ຈັນຍາທໍາວິຊາຊີບ ແລະ ຮັບຮູ້ລະດັບການສຶກສາຂອງພະຍາບານ ຮຽນຈົບຫຼັກສູດ 3 ປີຂຶ້ນໄປເປັນພະຍາບານວິຊາຊີບ. ດັ່ງນັ້ນກະຊວງສາທາລະນະສຸກໄດ້ສ້າງ ຂີດຄວາມສາມາດພະຍາບານວິຊາຊີບຂຶ້ນໃນ ປີ 2013 ເພື່ອສ້າງກອບວຽກງານ ແລະ ກົນໄກສໍາລັບການຕິດຕາມຊຸກຍູ້ ແລະ ຄຸ້ມຄອງຄຸນນະພາບຂອງແຫລ່ງຊັບພະຍາກອນມະນຸດດ້ານການພະຍາບານ ເພື່ອສະໜອງການປົວລະບັດຮັກສາສຸຂະພາບຂອງປະຊາຊົນໃຫ້ມີຄຸນນະພາບສູງຂຶ້ນ.

ຜ່ານການນໍາໃຊ້ ແລະ ການປະເມີນຜົນຂີດຄວາມສາມາດ ພະຍາບານວິຊາຊີບໃນ ສປປ ລາວ ພົບວ່າພະຍາບານສ່ວນຫລາຍຍັງມີຂໍ້ຈໍາກັດກ່ຽວກັບ ຄວາມຮູ້, ທັກສະ, ຄວາມສາມາດດ້ານການນໍາພາ, ການຄິດວິເຄາະ, ການຄົ້ນຄວ້າ, ການມີຫົວຄິດປະດິດສ້າງ ແລະ ການສ້າງແຮງຈູງໃຈໃນການປະຕິບັດການບໍລິການວິຊາຊີບພະຍາບານ. ການພັດທະນາຄຸນຄ່າວິຊາຊີບຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ເມື່ອວິເຄາະ ແລະ ພິຈາລະນາເນື້ອໃນ ແລະ

ອີງປະກອບຂອງຂີດຄວາມສາມາດພະຍາບານລາວ ກັບ ຂີດຄວາມສາມາດພະຍາບານອາຊຽນ ແລະ ສາກົນແລ້ວ ເຫັນວ່າ ເນື້ອໃນຂີດຄວາມສາມາດພະຍາບານລາວຍັງບໍ່ສອດຄ່ອງກັບໂຄງສ້າງເນື້ອໃນຂອງອາຊຽນໃນດ້ານການ ສື່ສານ, ການບໍລິຫານຄວາມສ່ຽງ, ການຄົ້ນຄວ້າ ແລະການພັດທະນາຄຸນນະພາບວິຊາຊີບການພະຍາບານຢ່າງຕໍ່ ເນື່ອງ.

ດັ່ງນັ້ນພາຍໃຕ້ ການປະຕິບັດສັນຍາອາຊຽນວ່າດ້ວຍການຮັບຮູ້ຊຶ່ງກັນ ແລະ ກັນດ້ານວິຊາຊີບພະຍາບານ (ASEAN Mutual Recognition Arrangement on Nursing service : MRA) ໃນການເຄື່ອນຍ້າຍ ວິຊາຊີບເສລີ/ແຮງງານສີມື/ແຮງງານທີ່ມີພອນສະຫວັນໃນອາຊຽນ; ສະເພາະຜູ້ມີຄຸນສົມບັດຕາມມາດຕະຖານທີ່ ກຳນົດໄວ້ໃນສັນຍາດັ່ງກ່າວ ຊຶ່ງເລີ່ມໃນປີ 2015, ເພື່ອສ້າງຄວາມເຂັ້ມແຂງ ດ້ານຂີດຄວາມສາມາດ ຂອງຜູ້ ປະກອບວິຊາຊີບພະຍາບານ, ໂດຍສົ່ງເສີມການແລກປ່ຽນຮຽນຮູ້ຂໍ້ມູນ, ຄວາມຮູ້, ຄວາມຊ່ຽວຊານ, ປະສົບການ ຕ່າງໆ ແລະ ການປະຕິບັດທີ່ດີທີ່ສຸດ ເໝາະສົມກັບຄວາມຕອ້ງການສະເພາະຂອງບັນດາປະເທດສະມາຊິກ ອາຊຽນ. ດັ່ງນັ້ນ, ຄະນະກຳມະການວິຊາຊີບປິ່ນປົວ ການ ພະຍາບານ ແລະຜະດຸງຄັນ ມີຄວາມຈຳເປັນປັບປຸງຂີດ ຄວາມສາມາດພະຍາບານ ໃນປີ 2021 ເພື່ອໃຊ້ເປັນແນວທາງໃນການພັດທະນາພະຍາບານ ແລະ ວິຊາຊີບໃຫ້ມີ ຂີດຄວາມສາມາດໃນລະດັບສູງຂຶ້ນ, ສາມາດປະກອບສ່ວນເຂົ້າໃນການພັດທະນາ ການບໍລິການພະຍາບານໃນ ລະບົບສຸຂະພາບໃຫ້ມີຄຸນນະພາບ ແລະ ຄຸນຄ່າສູງຂຶ້ນ ເພື່ອຕອບສະ ໜອງຕາມຄວາມຮຽກຮ້ອງ ຕ້ອງການ ຂອງຜູ້ຮັບບໍລິການທີ່ແຕກຕ່າງ ແລະ ຫລາກຫລາຍວັດທະນະທຳທັງພາຍໃນປະເທດອາຊຽນ ແລະ ສາກົນໃຫ້ທັນ ກັບສະພາບການປ່ຽນແປງທີ່ເກີດຂຶ້ນຢ່າງຕໍ່ເນື່ອງ, ຄຽງຄູ່ກັນນັ້ນ ຍັງຈະໄດ້ປັບປຸງຫລັກສູດການສຶກສາພະຍາບານ ໃຫ້ສອດຄ່ອງກັບຂີດຄວາມສາມາດດັ່ງກ່າວ.

## ຈຸດປະສົງ

ໃຫ້ພະຍາບານໄດ້ຮັບຮູ້ ກ່ຽວກັບ (Inform nurses on the minimum competencies for Registered Nurse) ການກຳນົດ ຄວາມຮູ້ ຄວາມສາມາດ ແລະ ທັດສະນະຄະຕິ ຂອງພະຍາບານ ເພື່ອຂຶ້ນ ທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວການພະຍາບານໃນ ສປປ ລາວ:

1. ເປັນແນວທາງໃນການທົບທວນ ແລະພັດທະນາຫຼັກສູດພະຍາບານ (Direct pre-registration nursing curriculum development and review).
2. ນຳໃຊ້ໃນການພັດທະນາຂີດຄວາມສາມາດ, ປະເມີນນັກສຶກສາ ແລະພະຍາບານຈົບໃໝ່ (Guide the competency development and assessment of students and newly graduated RNs).

3. ປະເມີນຂີດຄວາມສາມາດ ຂອງພະຍາບານຕ່າງປະເທດ ທີ່ຈະມາເຮັດວຽກ ຢູ່ ສປປ ລາວ. (Assess the competencies of internationally qualified nurses seeking employment in Singapore.

4. ປະເມີນຜົນ ການປະຕິບັດວຽກງານຂອງພະຍາບານ (Evaluate nurses involved in professional disciplinary cases).

## ເປົ້າໝາຍ:

ການສ້າງຂີດຄວາມສາມາດລະດັບຊາດສຳລັບພະຍາບານເພື່ອ ພັນລະນາ:

1. ຂີດຄວາມສາມາດຫຼັກ **(Core competencies)** , ມາດຕະຖານຂອງຂີດຄວາມສາມາດ (**Competency Standard)** ແລະ ຕົວຊີ້ບອກຂອງຂີດຄວາມສາມາດ **(Competency indicator)** ໂດຍຄາດຫວັງໃຫ້ພະຍາບານ ໃຊ້ເປັນແນວທາງໃນການພັດທະນາຕົນເອງ ໃຫ້ມີຂີດຄວາມສາມາດໄປຕາມ ມາດຕະຖານຂອງການພະຍາບານວິຊາຊີບ ເພື່ອໃຫ້ການບໍລິການສຸຂະພາບຂອງປະຊາຊົນທັງພາຍໃນປະເທດ ອາຊຽນ ແລະສາກົນໄດ້.
2. ຈຳແນກລະດັບຂີດຄວາມສາມາດຂອງພະຍາບານວິຊາຊີບ ທີ່ຈະຖືກປະຕິບັດໃນຫຼາຍຕຳ ແໜ່ງງານທີ່ແຕກຕ່າງກັນຂອງພະຍາບານວິຊາຊີບທັງໃນໂຮງໝໍ ແລະໃນຊຸມຊົນ.
3. ກຳນົດຕົວຊີ້ບອກຂີດຄວາມສາມາດດ້ານພຶດຕິກຳໃນແຕ່ລະ ລະດັບຂອງຂີດຄວາມສາມາດ ຊຶ່ງຈະຊ່ວຍສະໜັບສະໜູນ, ຄຸ້ມຄອງ, ວັດແທກການປະຕິບັດວຽກງານໃນການພັດທະນາວິຊາຊີບທາງການພະຍາບານ.

## ຂະບວນການສ້າງ:

1. **ຄະນະກຳມະການວິຊາຊີບປິ່ນປົວ ການ ພະຍາບານ ແລະຜະດຸງຄັນ** ແຕ່ງຕັ້ງຄະນະກຳມະການປັບປຸງຂີດຄວາມສາມາດພະຍາບານວິຊາຊີບ, ມອບໝາຍ ແລະ ແບ່ງຄວາມຮັບຜິດຊອບໃນການວາງແຜນການປັບປຸງຂີດຄວາມສາມາດສະບັບປັບປຸງ ດັ່ງນີ້:

2. ທົບທວນຂີດຄວາມສາມາດພະຍາບານລາວສະບັບເດີມ, ສຶກສາກອບຂີດຄວາມສາມາດພະຍາບານອາຊຽນ ແລະສາກົນ.

3. ວິເຄາະເນື້ອໃນຄວາມເໝືອນ ແລະ ຄວາມແຕກຕ່າງຂອງຂີດຄວາມສາມາດລາວ, ອາຊຽນ ແລະ ສາກົນ ແລະສຶກສາແນວທາງຂອງການປັບປຸງ.

4. ອອກແບບຮ່າງຂີດຄວາມສາມາດພະຍາບານວິຊາຊີບສະບັບປັບປຸງ 2021,

5. ປະກອບຄຳເຫັນໃສ່ຮ່າງເນື້ອໃນ ແລະ ຮັບຮອງຂີດຄວາມສາມາດຂອງພະຍາບານວິຊາຊີບໃນ ສປປ. ລາວ

**ສະຫຼຸບຫຍໍ້:**

ຂີດຄວາມສາມາດພະຍາບານວິຊາຊີບ ສປປລາວ ສະບັບປັບປຸງ ປີ 2021 ປະກອບດ້ວຍ: 2 ພາກ ຄື: ພາກທີ 1 ຂີດຄວາມສາມາດຫລັກຂອງພະຍາບານວິຊາຊີບລາວທີ່ສອດຄ່ອງກັບອາຊຽນ 5 ຂົງເຂດ ເຊັ່ນ:

1)ຂົງເຂດກົດໝາຍ, ກົດລະບຽບ, ຈັນຍາທຳ ແລະ ຈັນຍາບັນ ວິຊາຊີບການພະຍາບານ (Professional, Legal and Ethical Nursing Practice)

2)ຂົງເຂດການປະຕິບັດວິຊາຊີບ ການພະຍາບານ (Professional Nursing Practice),

3)ຂົງເຂດຄວາມເປັນຜູ້ນຳ ແລະການຄຸ້ມຄອງການພະຍາບານ (Leadership and Nursing Management),

4)ຂົງເຂດການຄົ້ນຄວ້າທາງການພະຍາບານ (Nursing Research)

5)ຂົງເຂດການພັດທະນາຕົນເອງ ແລະວິຊາຊີບພະຍາບານ (Professional Nursing and Personal Development).

ພາກທີ 2 ລະດັບຂີດຄວາມສາມາດ:

ແຕ່ລະຂົງເຂດຂີດຄວາມສາມາດປະກອບມີ 4 ລະດັບ:

ລະດັບ 1. ຜູ້ຝຶກຫັດເລີ່ມຕົ້ນ ພະຍາບານເຮັດຕາມສິ່ງທີ່ບອກ ຫຼື ຄຳແນະນຳຈາກພະຍາບານ ຜູ້ມີປະສົບການ

ລະດັບ 2. ຜູ້ຝຶກຫັດຂັ້ນສູງທັດຈາກຂັ້ນເລີ່ມຕົ້ນ ພະຍາບານ 1-2 ປີ ຜູ້ຝຶກການປະຕິບັດການພະຍາບານ

ລະດັບ 3. ຜູ້ມີຂີດຄວາມສາມາດ 3-4 ປີ

ລະດັບ 4. ຜູ້ຊຳນານ ຫຼື ຊ່ຽວຊານ ຫຼາຍກວ່າ 5 ປີ

## ພາກຂອບໃຈ:

**ຄະນະກໍາມະການວິຊາຊີບປິ່ນປົວ ການ ພະຍາບານ  ແລະ ຜະດຸງຄັນ** ຂໍສະແດງຄວາມຂອບໃຈນໍາວິຊາການພະຍາບານທຸກທ່ານທີ່ໄດ້ຮ່ວມມື, ປະສານງານ, ປະກອບສ່ວນ ດ້ານສະຕິປັນຍາ ແລະ ເຫື່ອແຮງ ຢ່າງຕັ້ງໜ້າ ເພື່ອເຮັດໃຫ້ ການປັບປຸງຂີດຄວາມສາມາດສາມາດສະບັບນີ້ສໍາເລັດ, ຂໍຂອບໃຈນໍາຜູ້ຊົງຄຸນວຸດທິທີ່ໄດ້ກວດສອບຄວາມຖືກຕ້ອງຂອງເນື້ອໃນ ສໍານວນ ພາສາລາວ ພ້ອມທັງປະກອບຄໍາຄິດເຫັນເພີ່ມເຕີມ ເພື່ອໃຫ້ຂີດຄວາມສາມາດສາມາດສະບັບປັບປຸງໃຫ້ມີຄວາມສົມບູນ ແລະ ໄດ້ຖືກຮັບຮອງ. ຂໍຂອບໃຈນໍາ ຄະນະບໍລິຫານສະພາວິຊາຊີບປິ່ນປົວ, ກົມປິ່ນປົວ ແລະຟື້ນຟູສຸຂະພາບ ແລະກົມການສຶກສາສາທາລະນະສຸກ, ຂໍຂອບໃຈເປັນພິເສດຕໍ່ກັບບັນດາຊ່ຽວຊານຄູ່ຮ່ວມພັດທະນາ ຈາກໂຄງການພັດທະນາ ແລະ ຮັບປະກັນຄຸນນະພາບວິຊາຊີບປິ່ນປົວແບບຍືນຍົງ (JICA) ແລະ UNFPA ໄດ້ສະໜັບສະໜູນທາງວິຊາການ ແລະ ງົບປະມານໃນການປັບປຸງຂີດຄວາມສາມາດພະຍາບານວິຊາຊີບລາວສໍາເລັດ. ຫວັງຢ່າງຍິ່ງວ່າຂີດຄວາມສາມາດສະບັບປັບປຸງຈະເປັນປະໂຫຍດໃຫ້ແກ່ພະຍາບານ ແລະ ຜູ້ສົນໃຈສຶກສາໄດ້ນໍາໄປໃຊ້ໃນການພັດທະນາຕົນເອງໃຫ້ມີຂີດຄວາມສາມາດໃນລະດັບທີ່ສູງຂຶ້ນ ພ້ອມທັງນໍາໃຊ້ຂີດຄວາມສາມາດສະບັບປັບປຸງນີ້ເປັນແນວທາງໃນການປັບປຸງຫລັກສູດການສຶກສາພະຍາບານ ແລະ ການສຶກສາຕໍ່ເນື່ອງໃຫ້ເປັນມາດຕະຖານດຽວກັນໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບຂີດຄວາມສາມາດຂອງພະຍາບານວິຊາຊີບອາຊຽນ ແລະສາກົນຕໍ່ໄປໃນອະນາຄົດໄດ້.

**ຫົວໜ້າບອດພະຍາບານ ແລະຜະດຸງຄັນ**

## ອະທິບາຍຄຳສັບ (Related Definitions)

**ຂີດຄວາມສາມາດ (Competency): ໝາຍເຖິງ** ຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ຂອງພະຍາບານ ທີ່ຈຳເປັນຕ້ອງມີ ເພື່ອປະຕິບັດຕາມຂອບເຂດ, ມາດຕະຖານ ແລະ ຈັນຍາບັນວິຊາຊີບ.

**ພະຍາບານທີ່ມີຂີດຄວາມສາມາດ (Competent Nurse): ໝາຍເຖິງ** ພະຍາບານຜູ້ທີ່ມີໃບປະກອບວິຊາຊີບການພະຍາບານຕາມລະບຽບ, ສາມາດສະແດງພຶດຕິກຳໃນການໃຊ້ຄວາມຮູ້, ທັກສະ, ທັດສະນະຄະຕິ ຕາມຂອບເຂດ ແລະ ຂີດຄວາມສາມາດ ທີ່ກຳນົດໄວ້ຢ່າງເໝາະສົມໃນແຕ່ລະ ລະດັບ ເຊິ່ງສາມາດປະເມີນໄດ້.

**ຂີດຄວາມສາມາດຫຼັກ (Core competencies): ໝາຍເຖິງ** ມາດຕະຖານ ການປະຕິບັດ ແລະ ພຶດຕິກາ ທີ່ພະຍາບານຄວນສະແດງອອກ.

**ມາດຕະຖານຂີດຄວາມສາມາດ (Competency standard): ໝາຍເຖິງ** ມາດຕະຖານການປະຕິບັດ ແລະ ພຶດຕິກຳຂອງພະຍາບານທີ່ສະແດງອອກໃຫ້ສອດຄ່ອງກັບຂີດຄວາມສາມາດຫລັກ.

**ອົງປະກອບຂີດຄວາມສາມາດ (Competency statement): ໝາຍເຖິງ** ບັນດາພຶດຕິກຳ ທີ່ຕ້ອງການໃຫ້ພະຍາບານສະແດງອອກສອດຄ່ອງກັບຂີດຄວາມສາມາດຍ່ອຍ ແລະ ຂີດຄວາມສາມາດຫລັກ.

**ຕົວຊີ້ບອກຂີດຄວາມສາມາດ (Competency indicator): ໝາຍເຖິງ** ຕົວຊີ້ບອກ ຂີດຄວາມສາມາດທີ່ພະຍາບານສະແດງອອກຂະນະໃຫ້ການບໍລິການສຸຂະພາບ.

**ລະດັບຂີດຄວາມສາມາດ (Competency level): ໝາຍເຖິງ** ລະດັບຂອງພະຍາບານສະແດງອອກຂະນະການໃຫ້ການບໍລິການພະຍາບານດ້ານສຸຂະພາບ ທີ່ລະບຸໄວ້ຕາມລະດັບຂີດຄວາມສາມາດການປະຕິບັດໃນຄລີນິກຂອງ Benner’s stage of clinical competence, 1984).

## ພາກທີ I. ຂີດຄວາມສາມາດຫຼັກຂອງພະຍາບານ ປະກອບມີ:

1. **ປະຕິບັດວິຊາຊີບການພະຍາບານ, ລະບຽບການ ແລະ ຈັນຍາບັນ ວິຊາຊີບ ການພະຍາບານ (Professional, Legal and Ethical Nursing Practice).**
2. **ປະຕິບັດວິຊາຊີບການພະຍາບານ (Professional Nursing Practice).**
3. **ຄວາມເປັນຜູ້ນຳ ແລະ ການຄຸ້ມຄອງການພະຍາບານ (Leadership and Nursing Management).**
4. **ການຄົ້ນຄວ້າທາງການພະຍາບານ (Nursing Research).**
5. **ການພັດທະນາຕົນເອງ ແລະ ວິຊາຊີບພະຍາບານ (Professional Nursing and Personal Development).**

| ຂີດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
|---|---|---|
| **1: ປະຕິບັດວິຊາຊີບການພະຍາບານ, ລະບຽບການ ແລະ ຈັນຍາບັນ ວິຊາຊີບການພະຍາບານ (Professional, Legal and Ethical Nursing Practice)** | 1.1 ການປະຕິບັດຈັນຍາທຳ ແລະ ກົດຈັນຍາບັນພະຍາບານ (Ethical and Code Ethic Nursing Practice) | -ໃຫ້ການບໍລິການພະຍາບານໂດຍອີງຕາມກົດຈັນຍາບັນວິຊາຊີບພະຍາບານໃນລາວ.<br>-ໃຫ້ການບໍລິການໂດຍຄຳນຶງເຖິງຄວາມເໝາະສົມທາງດ້ານວັດທະນະທຳລາວ.<br>-ຮ່ວມມືກັບທີມງານທີ່ມີຫຼາກຫຼາຍວິຊາຊີບ ໃນສະຖານທີ່ບໍລິການປິ່ນປົວທຸກຂັ້ນ.<br>- ມີສ່ວນຮ່ວມໃນການຕັດສິນໃຈດ້ານຈັນຍາທຳ ແລະກົດຈັນຍາບັນວິຊາຊີບ. |
| | 1.2 ການປະຕິບັດ ກົດລະບຽບວິຊາຊີບການພະຍາບານ , (Legal of nursing professional practice) | ປະຕິບັດຕາມຂໍ້ກຳນົດກົດລະບຽບການພະຍາບານ ແລະ ກົດໝາຍການປິ່ນປົວ ຂອງ ສປປ ລາວ. |
| | 1.3 ຄວາມຮັບຜິດຊອບ (Responsibilities) | ສະແດງອອກໃນການໃຫ້ບໍລິການພະຍາບານຕາມຫຼັກການ ແລະ ເຕັກນິກທີ່ຖືກຕ້ອງດ້ວຍຄວາມເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບ. |
| **2: ປະຕິບັດວິຊາຊີບການພະຍາບານ (Professional Nursing Practice)** | 2.1 ໃຫ້ການບໍລິການທີ່ດີ (Service mind) ແກ່ຜູ້ຮັບບໍລິການ | ໃຫ້ການບໍລິການທີ່ດີ ຫລື ໃຫ້ການບໍລິການດ້ວຍໃຈ<br>- ທັກທາຍສະບາຍດີ ດ້ວຍຄວາມຍິ້ມແຍ້ມແຈ່ມໃສ;<br>- ສະແດງອອກໃນການເວົ້າຈາສຸພາບ, ອ່ອນນ້ອມ ແລະ ຍິນດີຕ້ອນຮັບຜູ້ຮັບບໍລິການ;<br>- ຮັບຟັງ, ຕອບຮັບ, ດ້ວຍການເວົ້າ, ການໃຊ້ສັນຍາລັກ, ການຂຽນ ແລະ /ຫຼື ໃຊ້ເຄື່ອງອີເລັກໂຕນິກທີ່ ເໝາະສົມ ແລະ ມີປະສິດທິພາບກັບຜູ້ຮັບ ບໍລິການ ແລະ ທີມສຸຂະພາບ;<br>- ສັງເກດ ຄວາມຮູ້ສຶກ ແລະ ພຶດຕິກຳທີ່ຕ້ອງການບໍລິການສຸຂະພາບ ຂອງຜູ້ຮັບບໍລິການແຕ່ລະບຸກຄົນ ແລະ ຄອບຄົວ;<br>- ສະແດງອອກໃນການມີສຳພັນທະພາບທີ່ດີກັບຜູ້ຮັບບໍລິການ;<br>- ໃຫ້ຄຳແນະນຳ ແລະ ໃຫ້ຂໍ້ມູນຕາມຄວາມຈຳເປັນ; |

| ຂີດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
|---|---|---|
| | -ເທັກນິກປະຕິບັດການພະຍາບານ (Nursing Technic) | - ໃຫ້ບໍລິການພະຍາບານທີ່ມີຫົວຄິດປະດິດສ້າງ; ໂດຍຄຳນຶງເຖິງຄວາມຮູ້ສຶກຂອງຜູ້ໃຊ້ບໍລິການ ແລະ ຄອບຄົວ;<br>-ໃຫ້ບໍລິການພະຍາບານທີ່ຖືກຕ້ອງຕາມມາດຕະຖານວິຊາຊີບ;<br>- ອະທິບາຍຄວາມຮູ້ສຶກໃຫ້ຜູ້ໃຊ້ບໍລິການ, ຄອບຄົວຂອງເຂົາເຈົ້າທີ່ສະແດງອອກເຖິງຄວາມເອົາໃຈໃສ່ ແລະສ້າງຄວາມປະທັບໃຈແກ່ຜູ້ຮັບບໍລິການ. |
| | 2.2 ນຳໃຊ້ຫຼັກການຄວາມປອດໄພໃນການໃຫ້ບໍລິການສຸຂະພາບ (Apply Patient Safety Principle) | - ຈັດສະພາບແວດລ້ອມທີ່ເໝາະສົມ ແລະປອດໄພ ແກ່ຜູ້ຮັບ ແລະ ຜູ້ໃຫ້ບໍລິການ;<br>- ປ້ອງກັນຄວາມສ່ຽງທີ່ອາດຈະເກີດຂຶ້ນຕໍ່ຄົນເຈັບຈາກການບໍລິການສຸຂະພາບ;<br>- ຈຳແນກ ແລະຈັດລຳດັບຄວາມສຳຄັນການເຈັບປ່ວຍຂອງ ຄົນເຈັບຢ່າງປອດໄພ ແລະມີປະສິດທິພາບ;<br>-ໃຫ້ການບໍລິການພະຍາບານໃນກໍລະນີສຸກເສີນ ແລະກໍລະນີຕິດເຊື້ອໃຫ້ປອດໄພ ແລະມີປະສິດທິພາບ;<br>- ປະຕິບັດການກັນການຕິດເຊື້ອແບບມາດຕະຖານ;<br>- ປະຕິບັດຕາມຂອບເຂດການພະຍາບານ;<br>- ເປັນເຈົ້າການໃນການພັດທະນາຄຸນນະພາບການບໍລິການຢ່າງຕໍ່ເນື່ອງ. |
| | 2.3 ການໃຊ້ຂະບວນການພະຍາບານໃນການດູແລ ຜູ້ໃຊ້ບໍລິການ (Using Nursing Process to Client) | - ນຳໃຊ້ຂະບວນການພະຍາບານໃນການປະຕິບັດການພະຍາບານແກ່ຜູ້ຮັບບໍລິການໃນການສົ່ງເສີມ, ການກັນພະຍາດ, ການດູແລ ປິ່ນປົວ ແລະ ການຟື້ນຟູສຸຂະພາບ;<br>- ປະເມີນສຸຂະພາບ ແລະ ກຳນົດບັນຫາສຸຂະພາບຂອງຜູ້ໃຊ້ບໍລິການ ຄອບຄົວ ແລະ ຊຸມຊົນ;<br>- ບົ່ງມະຕິທາງການພະຍາບານ;<br>- ວາງແຜນການພະຍາບານ;<br>- ປະຕິບັດການພະຍາບານ;<br>- ປະເມີນຜົນໄດ້ຮັບຈາກການພະຍາບານ;<br>- ບັນທຶກການພະຍາບານໃຫ້ຖືກຕ້ອງ ແລະ ຄົບຖ້ວນ; |

| ຂີດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມ ຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
| --- | --- | --- |
| | | - ຊຸກຍູ້ ແລະ ສົ່ງເສີມ ຜູ້ຮັບບໍລິການ, ຄອບຄົວ, ຊຸມຊົນ ແລະ ທີມສຸຂະພາບ ໃຫ້ຄວາມຮ່ວມມືໃນການພະຍາບານທີ່ມີຄຸນນະພາບ ແລະ ຕໍ່ເນື່ອງ;<br>- ພັດທະນາລະບົບການນໍາໃຊ້ຂະບວນການພະຍາບານເພື່ອປະດິດສ້າງຄຸນນະພາບໃນການພະຍາບານໃຫ້ສູງຂຶ້ນແບບມືອາຊີບ. |
| | 2.4 ການສອນ ແລະ ການໃຫ້ຄໍາປຶກສາ (Teaching and Counseling) | - ການໃຫ້ ຂໍ້ມູນ ຂ່າວສານ ແລະການຊ່ວຍເຫຼືອໃນການແກ້ໄຂບັນຫາສຸຂະພາບຂອງຜູ້ຮັບບໍລິການເປັນບຸກຄົນ, ເປັນກຸ່ມໃນໂຮງໝໍ ແລະຊຸມຊົນ;<br>- ໃຫ້ຄວາມຮູ້ດ້ານສຸຂະພາບແກ່ບຸກຄົນ, ຄອບຄົວ ແລະ ຊຸມຊົນ.<br>- ສົ່ງເສີມ, ສະໜັບສະໜູນ ແລະສອນໃຫ້ຜູ້ຮັບບໍລິການເກີດການຮຽນຮູ້ ແລະສາມາດດູແລສຸຂະພາບຕົນເອງ;<br>- ສອນ ແນະນໍາ ແລະ/ຫຼື ສາທິດວິທີປະຕິບັດ ການດູແລຄົນເຈັບສະເພາະພະຍາດ;<br>- ໃຫ້ຄໍາປຶກສາແກ່ຜູ້ຮັບບໍລິການ, ຄອບຄົວ ແລະ ຊຸມຊົນທີ່ມີບັນຫາສຸຂະພາບທີ່ບໍ່ຊັບຊ້ອນ ແລະ ມີອາການແຊກຊ້ອນ. |
| | 2.5 ການບໍລິການທີ່ເຂົ້າເຖິງກຸ່ມເປົ້າໝາຍ (Proactive Service - Health Care Coverage) | -ປະເມີນບັນຫາສຸຂະພາບ, ລະບຸຄວາມຕ້ອງການສະເພາະດ້ານການບໍລິການສຸຂະພາບໃຫ້ບຸກຄົນ, ຄອບຄົວ ແລະ ຊຸມຊົນ;<br>- ຈັດການສົ່ງເສີມສຸຂະພາບທີ່ມີຄຸນນະພາບສູງຕໍ່ບັນຫາສຸຂະພາບທີ່ຄາດຫວັງຂອງບຸກຄົນ, ຄອບຄົວ ແລະຊຸມຊົນ;<br>- ປະເມີນຜົນໄດ້ຮັບກ່ຽວກັບການໃຫ້ບໍລິການສົ່ງເສີມສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ;<br>- ມີສ່ວນຮ່ວມໃນການຊີ້ນາສັງຄົມໃນດ້ານສຸຂະພາບ ແລະ ພິທັກສິດໃຫ້ກັບຄົນເຈັບ ຫລື ຜູ້ໃຊ້ບໍລິການ. |

| ຂົງເຂດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
|---|---|---|
| **3: ຄວາມເປັນຜູ້ນຳ ແລະ ການຄຸ້ມຄອງການພະຍາບານ (Leadership and Nursing Management)** | 3.1 ສະແດງບົດບາດການນຳພາການໃຫ້ບໍລິການທາງພະຍາບານ (Perform role of the nursing leadership) | -ມີວິໄສທັດ, ກຳນົດເປົ້າໝາຍຊັດເຈນໃນການບໍລິຫານການພະຍາບານ;<br>- ເປັນຜູ້ນຳໃນການເຮັດວຽກ, ສ້າງບັນຍາກາດການເຮັດວຽກເປັນທີມຂອງໜ່ວຍງານໃນຄວາມຮັບຜິດຊອບ;<br>- ໃຫ້ການດູແລ ແລະຊ່ວຍເຫຼືອຜູ້ທີ່ຢູ່ໃນຄວາມຮັບຜິດຊອບ ເພື່ອສົ່ງເສີມຄວາມໝັ້ນໃຈໃນການປະຕິບັດວຽກງານ;<br>- ປະພຶດຕົນ ແລະເປັນແບບຢ່າງທີ່ດີໃນການນຳພາ;<br>-ເຂົ້າໃຈເຖິງຄວາມຈຳເປັນຂອງຮູບແບບ ແລະວິທີການນຳພາ ໃນສະຖານະການທີ່ແຕກຕ່າງກັນ;<br>- ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນທີມງານ;<br>-ຈັດລຳດັບຄວາມສຳຄັນຂອງວຽກງານ ແລະຈັດການເວລາຢ່າງມີປະສິດທິພາບ;<br>- ຝຶກຝົນຕົນເອງໃຫ້ເປັນສະມາຊິກທີ່ດີໃນສະຖານະການທີ່ແຕກຕ່າງກັນ ເພື່ອນຳມາປັບເຂົ້າໃນຮູບແບບ ແລະແນວທາງ ຂອງການເປັນຜູ້ນຳ. |
| | 3.2 ສະແດງບົດບາດໃນການຄຸ້ມຄອງ (Perform role of management) | -ປະກອບສ່ວນເຂົ້າໃນການທົບທວນ ແລະປັບປຸງນະໂຍບາຍ, ສ້າງແຜນການພັດທະນາ, ກຳນົດຂັ້ນຕອນການປະຕິບັດງານຂອງຫນ່ວຍງານ;<br>- ມີການກຳນົດເປົ້າໝາຍໃນການດູແລຄົນເຈັບໃນແຕ່ລະມື້;<br>- ຄຸ້ມຄອງ ແລະນຳໃຊ້ຊັບພະຍາກອນທາງການພະຍາບານໄດ້ຢ່າງມີປະສິດທິພາບ;<br>- ປະສານງານກັບທີມສຸຂະພາບ ແລະພາກສ່ວນທີ່ກ່ຽວຂ້ອງ;<br>- ຈັດລະບົບການບໍລິການສຸຂະພາບໃຫ້ຜູ້ໃຊ້ບໍລິການໄດ້ຮັບການບໍລິການທີ່ມີຄຸນນະພາບ;<br>-ໃຫ້ຄຳຄິດເຫັນ, ຄຳແນະນຳ ເມື່ອມີການປ່ຽນແປງ ແລະຈັດການກັບຜົນກະທົບການປະຕິບັດຕົນ ຫຼື ຕໍ່ຫນ່ວຍງານຢ່າງມີປະສິດທິພາບ; |

| ຂີດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມ ຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
|---|---|---|
| | | - ຄຸ້ມຄອງລະບົບ ການໃຫ້ບໍລິການດ້ານສຸຂະພາບທີ່ມີຄຸນນະພາບໃຫ້ແກ່ຄົນເຈັບ / ຜູ້ຮັບບໍລິການ ແລະຄອບຄົວ. |
| | 3.3 ການສ້າງແຮງຈູງໃຈ (Achievement Motivation) | - ເຮັດວຽກຕົງຕໍ່ເວລາ ແລະ ປະຕິບັດວຽກງານຢ່າງຄົບຖ້ວນ;<br>- ປະຕິບັດຕາມການມອບໝາຍ ໂດຍອີງຕາມມາດຕະຖານການພະຍາບານ;<br>- ກໍານົດເປົ້າໝາຍທີ່ເໝາະສົມໃນການເຮັດວຽກງານ, ຮູ້ຄົ້ນຫາວິທີເຮັດວຽກງານໃຫ້ບັນລຸຜົນ;<br>- ມີການປຶກສາຫາລືແລກປ່ຽນຄວາມຮູ້ ເພື່ອສະໜັບສະໜູນການເຮັດວຽກໃຫ້ບັນລຸຜົນ;<br>- ຕິດຕາມຊຸກຍູ້ ຜົນສໍາເລັດຂອງວຽກງານຕາມຂອບເຂດທີ່ກໍານົດໄວ້ຢ່າງມີຄຸນນະພາບ;<br>- ການໄດ້ຮັບຄ່າຕອບແທນ, ລາງວັນ ແລະຍ້ອງຍໍສັນລະເສີນ ທີ່ເໝາະສົມ;<br>-ການໄດ້ຮັບໂອກາດການຍົກລະດັບ, ແລກປ່ຽນຖອດຖອນບົດຮຽນ ແລະພັດທະນາຄວາມຮູ້ ຄວາມສາມາດທາງດ້ານວິຊາຊີບ. |
| | 3.4 ການຕິດຕາມຊຸກຍູ້ທາງການພະຍາບານ (Nursing Supervision) | - ເປັນທີ່ປຶກສາ ແລະໃຫ້ການຊ່ວຍເຫຼືອຜູ້ທີ່ຢູ່ໃນຄວາມຮັບຜິດຊອບ;<br>- ໃຫ້ຄໍາປຶກສາ ແລະສະໜັບສະໜູນ ເພື່ອນຮ່ວມງານເພື່ອໃຫ້ມີຜົນງານທີ່ມີຄຸນນະພາບສູງ;<br>- ນໍາພາ, ສອນວິທີເຮັດວຽກ ແລະໃຫ້ຄໍາແນະນໍາກ່ຽວກັບການປະຕິບັດວຽກງານ;<br>- ຕິດຕາມກວດກາ ແລະປະເມີນຄຸນນະພາບໃນການປະຕິບັດວຽກງານ. |
| | 3.5.ການປະຕິບັດວຽກງານຮ່ວມກັບສາຂາວິຊາຊີບ ອື່ນ (Inter professional practice with other health workers) | - ເຮັດວຽກງານໃນສ່ວນທີ່ຕົນໄດ້ຮັບມອບໝາຍໄດ້ສໍາເລັດ;<br>- ປະສານງານ ແລະໃຫ້ຄວາມຮ່ວມມືໃນການວາງແຜນ, ປະຕິບັດ, ປະເມີນຜົນ ແລະຮັບຮູ້ ຜົນການປະຕິບັດງານຮ່ວມກັນສາຂາວິຊາຊີບອື່ນໆ; |

| ຂີດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມ ຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
|---|---|---|
| | -ການເຮັດວຽກເປັນທີມ Teamwork | - ສະໜັບສະໜູນ ແລະຊ່ວຍເຫຼືອທີມງານ ໃນການ ປະຕິບັດວຽກງານ ເພື່ອໃຫ້ວຽກປະສົບຜົນສໍາເລັດ;<br>- ນໍາພາທີມງານປະຕິບັດພາລະກິດໃຫ້ໄດ້ຮັບຜົນສໍາເລັດ;<br>- ປະຕິບັດຕາມການມອບໝາຍ ໂດຍອີງຕາມມາດຕະຖານ ການພະຍາບານ. |
| | 3.6 ການຈັດສະພາບແວດ ລ້ອມໃນສະຖານທີ່ເຮັດ ວຽກທີ່ປອດໄພ (Creating a safety working's environment) | - ຈັດລະບຽບສະຖານທີ່ເຮັດວຽກ ແລະ ປະກອບ ອຸປະກອນໃຫ້ພຽງພໍໃນການປະຕິບັດການດູແລສຸຂະພາບ;<br>- ສ້າງລະບົບ ແລະກົນໄກ ທີ່ອໍານວຍຄວາມສະດວກໃນ ການປະຕິບັດວຽກງານ;<br>- ສະໜັບສະໜູນ, ປະສານງານ, ໃຫ້ຄວາມຮ່ວມມືກັບທີມ ງານວິຊາຊີບປິ່ນປົວ;<br>- ບັນທຶກ ແລະລາຍງານສະພາບການທີ່ອາດຈະສົ່ງຜົນ ກະທົບຕໍ່ຄວາມປອດໄພຂອງຄົນເຈັບ / ຄອບຄົວ ແລະ ກັບທີມງານວິຊາຊີບປິ່ນປົວໃຫ້ແກ່ຜູ້ຮັບຜິດຊອບ. |
| **4: ການວິໄຈທາງການພະຍາບານ (Nursing Research)** | 4.1 ການຄິດວິເຄາະ (Analytical thinking ) | - ວິເຄາະບັນຫາ ແລະປັດໃຈທີ່ກ່ຽວຂ້ອງທີ່ເຮັດໃຫ້ເກີດ ບັນຫາຕ່າງໆຂອງວຽກງານ ທີ່ເຊື່ອມໂຍງຂັ້ນພື້ນຖານ ທີ່ ສະຫຼັບຊັບຊ້ອນເຊັ່ນ: ວິເຄາະການປ່ຽນແປງສະພາບ ເສດຖະກິດ, ສັງຄົມ, ວັດທະນະທາ, ເຕັກໂນໂລຊີດ້ານ ການແພດມີຄວາມກ້າວໜ້າສູງ, ລະບົບການບໍລິການ ສຸຂະພາບ ແລະການພະຍາບານ;<br>- ຈັດລຽງລໍາດັບຄວາມສໍາຄັນບັນຫາ ເພື່ອກໍານົດແນວທາງ ໃນການ ປັບປຸງ, ແກ້ໄຂບັນຫາ;<br>- ຄາດຄະເນຜົນທີ່ໄດ້ຮັບ;<br>- ສ້າງແຜນງານ, ວິທີການ ແລະຂັ້ນຕອນໃນການຈັດຕັ້ງ ປະຕິບັດການເຮັດວຽກ; |
| | 4.2 ການວິໄຈ, ການນໍາໃຊ້ ຫລັກຖານດ້ານ ວິທະຍາສາດ ແລະນະ ວັດຕະກໍາ | - ເຮັດບົດວິໄຈ ຫຼື ເຂົ້າຮ່ວມການວິໄຈທາງການພະຍາບານ, ການວິໄຈສາຫາລະນະສຸກ ແລະນະວັດຕະກໍາ;<br>- ທົບທວນຄວາມຮູ້ພື້ນຖານເພື່ອນໍາໃຊ້ໃນການຄົ້ນຄວ້າ ວິທະຍາສາດ; |

| ຂີດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
|---|---|---|
| | (Research, evidence based -practice and innovation) | - ນຳໃຊ້ຜົນການວິໄຈ ແລະນະວັດຕະກຳທາງການພະຍາບານເພື່ອປັບປຸງ ແລະພັດທະນາວິຊາຊີບການພະຍາບານ. |
| | 4.3 ເຕັກໂນໂລຢີ ແລະ ຂໍ້ມູນຂ່າວສານ (Technology and Information) | - ຕິດຕາມຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ ໃໝ່ໆໃນສາຂາວິຊາຊີບພະຍາບານ, ສາທາລະນະສຸກ ແລະອື່ນໆທີ່ກ່ຽວຂ້ອງ;<br>- ທົບທວນຄວາມຮູ້ ແລະວິເຄາະຂໍ້ມູນການຕິດຕາມເຝົ້າລະວັງບັນຫາສຸຂະພາບ ທີ່ມີຄວາມສ່ຽງ ແລະປັບປຸງຄຸນນະພາບການບໍລິການ;<br>- ນຳໃຊ້ຄວາມຮູ້ ຄວາມສາມາດ ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານໃໝ່ທີ່ເໝາະສົມກັບວຽກງານຕົວຈິງ. |
| **5: ວິຊາຊີບ ແລະ ການ ພັດທະນາຕົນເອງ (Professional and Personal Development)** | 5.1.ການພັດທະນາວິຊາຊີບຂອງຕົນເອງ (Personnel Professional Development) | -ພັດທະນາຕົນເອງໃຫ້ມີຄວາມຮູ້ ຄວາມຊ່ຽວຊານໃນສາຂາວິຊາຊີບພະຍາບານໃຫ້ທັນກັບຍຸກສະໄໝຢ່າງຕໍ່ເນື່ອງ,<br>-ສະໜັບສະໜູນການພັດທະນາພະຍາບານໃຫ້ມີພາວະຄວາມຜູ້ນຳ, ຜູ້ນຳການປ່ຽນແປງ ແລະຄວາມຊ່ຽວຊານລົງເລິກສາຂາວິຊາຊີບ. |
| | 5.2 ການສຶກສາຕໍ່ເນື່ອງ (Continue Education? | -ສືບຕໍ່ຍົກລະດັບວິຊາຊີບການພະຍາບານຕໍ່ເນື່ອງ<br>-ເອົາໃຈໃສ່ໃນການອົບຮົມ ຮຽນຮູ້ ແລະເພີ່ມພູນປະສົບການດ້ວຍຕົນເອງຢ່າງຕໍ່ເນື່ອງ ຫຼືເອີ້ນວ່າການສຶກສາການຮຽນຮູ້ຕະຫຼອດຊີວິດ. |
| | 5.3 ການສົ່ງເສີມຄຸນຄ່າວິຊາຊີບ (Promoting professional values) | - ຮັກສາບົດບາດຂອງພະຍາບານວິຊາຊີບ ໂດຍການຢຶດຖືປະຕິບັດຕາມຈັນຍາທຳ, ຈັນຍາບັນ ແລະມາດຕະຖານວິຊາຊີບການພະຍາບານ;<br>- ມີສ່ວນຮ່ວມໃນພັດທະນາຄຸນນະພາບ ການບໍລິຫານການບໍລິການ, ການສຶກສາ, ການວິໄຈ, ປະດິດສ້າງນະວັດຕະກຳໃໝ່;<br>- ມີສ່ວນຮ່ວມໃນກິດຈະກຳ ເຊັ່ນ: ກອງປະຊຸມ, ສຳມະນາວິຊາການພັດທະນາວິຊາຊີບການພະຍາບານລະດັບຊາດ, ພາກພື້ນ ແລະ ສາກົນ; |

| ຂີດຄວາມສາມາດຫຼັກ (Core Competency Domains) | ມາດຕະຖານຂີດຄວາມຄວາມສາມາດ (Competency Standard ) | ຕົວຊີ້ບອກຂີດຄວາມສາມາດ (Competency Indicators) |
|---|---|---|
| | | - ໃຫ້ໂອກາດຜູ້ອື່ນໃນການພັດທະນາຕົນເອງ;<br>- ໃຫ້ຄຳຕິຊົມຜົນການປະຕິບັດເພື່ອສົ່ງເສີມການພັດທະນາຢ່າງຕໍ່ເນື່ອງ;<br>- ເຜີຍແຜ່ ສົ່ງເສີມ ແລະ ສ້າງຄຸນຄ່າວິຊາຊີບພະຍາບານໃນສັງຄົມໃຫ້ກວ້າງຂວາງ ທັງພາຍໃນ ແລະຕ່າງປະເທດຢ່າງຕໍ່ເນື່ອງ. |

## ພາກທີ II. ລະດັບຂີດຄວາມສາມາດພະຍາບານວິຊາຊີບລາວ

ລະດັບຂີດຄວາມສາມາດພະຍາບານວິຊາຊີບລາວ ແມ່ນລະດັບຂອງພະຍາບານສະແດງອອກຂະບະການໃຫ້ການບໍລິການພະຍາບານດ້ານສຸຂະພາບ ທີ່ລະບຸໄວ້ຕາມລະດັບຂີດຄວາມສາມາດການປະຕິບັດຂອງ Benner's stage of clinical competence, 1984) ມີ 4 ລະດັບດັ່ງນີ້:




**ລະດັບ 1:** ຜູ້ຝຶກຫັດ (ເລີ່ມຕົ້ນ) Novice ພະຍາບານຊັ້ນສູງ ແລະ ປະລິນຍາຕີ ຈົບໃໝ່ ເຮັດຕາມສິ່ງທີ່ບອກ ຫລືຄໍາແນະນໍາຈາກ ພະຍາບານຜູ້ມີປະສົບການ.

**ລະດັບ 2:** ຜູ້ຝຶກຫັດຂັ້ນສູງຖັດຈາກຂັ້ນເລີ່ມຕົ້ນ Advance beginner 1-2 ປີ. ພະຍາບານຜູ້ທີ່ມີໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວເບື້ອງຕົ້ນຈະເລີ່ມຝຶກງານວິຊາຊີບສໍາລັບພະຍາບານ 1 ປີ ເພື່ອໄດ້ໃບປະກອບວິຊາຊີບປິ່ນປົວການທີ່ພະຍາບານສົມບູນ, ສາມາດຈັດລໍາດັບຄວາມສໍາຄັນການດູແລໄດ້ ຖ້າມີກໍລະນີຫຍຸ້ງຍາກແມ່ນຂໍຄໍາປຶກສາ ກັບຜູ້ມີປະສົບການເພື່ອການຕັດສິນໃຈໃຫ້ການດູແລທີ່ເໝາະສົມ.

**ລະດັບ 3:** ຜູ້ມີຄວາມສາມາດປະຕິບັດການພະຍາບານ Competent 3-4 ປີ ສາມາດໃຫ້ການດູແລສຸຂະພາບທີ່ຫຍຸ້ງຍາກໄດ້ ແຕ່ຍັງຂາດຄວາມຄ່ອງແຄ້ວ ແລະໃຫ້ການດູແລໃນລະດັບຄວາມຊໍານານ ແລະການຈັດການກັບຄວາມລັ່ງເລໃນຂະນະປະຕິບັດວຽກງານໄດ້.

**ລະດັບ 4:** ຜູ້ມີຄວາມສາມາດປະຕິບັດການພະຍາບານ Competent > 5 ປີ, ມີຄວາມຊໍານານ ຄວາມຊ່ຽວຊານໃນການ ວິເຄາະບັນຫາ ເປັນຜູ້ໃຫ້ຄໍາປຶກສາ ແລະພິຈາລະນາທາງເລືອກໃນການແກ້ໄຂບັນຫາ ແລະໃຫ້ການດູແລສຸຂະພາບຖືກຕ້ອງຕາມມາດຕະຖານ ເພື່ອຕອບສະໜອງການດູແລສຸຂະພາບໄດ້ຖືກຕ້ອງ.

ການກຳນົດເນື້ອໃນລະດັບຂີດຄວາມສາມາດພະຍາບານວິຊາຊີບລະດັບ 1-4 ແມ່ນໄດ້ອະທິບາຍເນື້ອໃນທີ່ມີຄວາມສອດຄ່ອງກັບຂີດຄວາມສາມາດຫລັກ ມາດຕະຖານຂີດຄວາມສາມາດ ແລະຕົວຊີ້ວັດຂີດຄວາມສາມາດ ເຊິ່ງສາມາດປະເມີນໄດ້. ໂດຍມີລາຍລະອຽດໃນຕາຕະລາງດັ່ງນີ້:

| **ຂີດຄວາມສາມາດຫລັກ** (Core Competency Domains) | **ມາດຕະຖານຂີດຄວາມສາມາດ** (Competency Standard) | **ຕົວຊີ້ວັດຂີດຄວາມສາມາດ** (Competency Indicators) | **ລະດັບຂີດຄວາມສາມາດພະຍາບານວິຊາຊີບ** | | | |
|---|---|---|---|---|---|---|
| | | | **ລະດັບ 1** | **ລະດັບ 2** | **ລະດັບ 3** | **ລະດັບ 4** |
| **1. ຈັນຍາທຳ ແລະ ການປະຕິບັດຕາມລະບຽບກົດ ໝາຍ** (Ethics and Legal Practice) | 1.1 ຈັນຍາທຳ, ແລະ ການປະຕິບັດຈັນຍາບັນວິຊາຊີບພະຍາບານ (Ethical and Code Ethic Nursing Practice) | ໃຫ້ການບໍລິການພະຍາບານໂດຍອີງຕາມ ຈັນຍາທຳ,ຈັນຍາບັນວິຊາຊີບພະຍາບານ | ປະຕິບັດການພະຍາບານໂດຍເຄົາລົບສິດທິມະນຸດ, ສິດທິຄົນເຈັບ, ລະບຽບ ກົດໝາຍ, ຈັນຍາທຳ ແລະຈັນຍາບັນ ວິຊາຊີບ ການພະຍາບານ ແລະ ຜະດຸງຄັນ ພາຍໃຕ້ຄຳແນະນຳຈາກພະຍາບານຜູ້ມີປະສົບການ. | -ມີສ່ວນຮ່ວມໃນການປະເມີນບັນຫາ ແລະ ຈັດລະດັບຄວາມສຳຄັນຂອງບັນຫາ ໃນການດູແລຜູ້ຮັບບໍລິການ ດ້ານ ລະບຽບກົດໝາຍ, ຈັນຍາທຳ ແລະຈັນຍາບັນ ວິຊາຊີບ ການພະຍາບານ ແລະຜະດຸງຄັນ<br>-ຂໍຄຳປຶກສາ ກັບຜູ້ມີປະສົບການເພື່ອການຕັດສິນໃຈ ໃນການແກ້ໄຂບັນຫາ ຈັນຍາທຳ ແລະຈັນຍາບັນ ວິຊາຊີບ ການ | -ສາມາດປະເມີນບັນຫາ ແລະຈັດລະດັບຄວາມສຳຄັນຂອງບັນຫາ ແລະ ວາງແຜນການແກ້ໄຂບັນຫາ ໃນການດູແລຜູ້ຮັບບໍລິການ ດ້ານລະບຽບ ກົດໝາຍ, ຈັນຍາທຳ ແລະຈັນຍາບັນ ວິຊາຊີບ ການພະຍາບານ ແລະ ຜະດຸງຄັນດ້ວຍຕົນເອງ. | -ມີຄວາມຊຳນານໃນການ ວິເຄາະບັນຫາ ແລະຈັດລະດັບຄວາມສຳຄັນ, ເປັນຜູ້ໃຫ້ຄຳປຶກສາ ແລະ ພິຈາລະນາທາງເລືອກໃນການແກ້ໄຂບັນຫາ ຕາມມາດຕະຖານ ລະບຽບ, ກົດໝາຍ, ຈັນຍາທຳ ແລະຈັນຍາບັນ ວິຊາຊີບ ການພະຍາບານ ແລະ ຜະດຸງຄັນທີ່ຕອບສະໜອງ ຄວາມຕ້ອງການດູແລສຸຂະພາບໄດ້ຖືກຈຸດ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | ພະຍາບານ ແລະ ຜະດຸງຄັນທີ່ສັບສົນ. | | |
| | | -ໃຫ້ການບໍລິການໂດຍຄຳນຶງເຖິງຄວາມເໝາະສົມທາງດ້ານວັດທະນະທຳລາວ. | ປະຕິບັດການພະຍາບານ ພາຍໃຕ້ຄຳແນະນຳຈາກພະຍາບານ ຜູ້ມີປະສົບການ ໃນການປະເມີນສຸຂະພາບ ໂດຍເຄົາລົບວັດທະນະທຳຂອງຜູ້ຮັບບໍລິການ ໂດຍໃຫ້ຄຸນຄ່າ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະ ການປະຕິບັດຂອງບຸກຄົນ ແລະ ກຸ່ມຄົນ | ສາມາດປະເມີນບັນຫາ ແລະຈັດລຽງລະດັບຄວາມສຳຄັນຂອງບັນຫາສຸຂະພາບ ແລະ ຂໍຄຳປຶກສາ ກັບຜູ້ມີປະສົບການເພື່ອການຕັດສິນໃຈ ໃນການດູແລສຸຂະພາບຕາມວັດທະນະທຳຂອງຜູ້ຮັບບໍລິການ, ເຄົາລົບຄຸນຄ່າ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະ ການປະຕິບັດຂອງບຸກຄົນ ແລະ ກຸ່ມຄົນ | ສາມາດຕັດສິນໃຈໃນການກຳນົດບັນຫາ, ຈັດລຽງລະດັບຄວາມສຳຄັນຂອງບັນຫາສຸຂະພາບ, ວາງແຜນການດູແລສຸຂະພາບ ດ້ານວັດທະນະທຳຂອງຜູ້ຮັບບໍລິການ ຢ່າງເຄົາລົບຄຸນຄ່າ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະ ການປະຕິບັດຂອງບຸກຄົນ ແລະ ກຸ່ມຄົນດ້ວຍຕົນເອງ. | -ມີຄວາມຊຳນານ ແລະໃຫ້ຄຳປຶກສາແນະແນວໃນການວິເຄາະ ແລະຈັດລະດັບຄວາມສຳຄັນຂອງບັນຫາສຸຂະພາບ, ໃຫ້ການດູແລສຸຂະພາບ ດ້ານວັດທະນະທຳຂອງຜູ້ຮັບບໍລິການ, ຢ່າງເຄົາລົບຄຸນຄ່າ, ຮີດຄອງປະເພນີ, ຄວາມເຊື່ອຖື ແລະ ການປະຕິບັດຂອງບຸກຄົນ ແລະ ກຸ່ມຄົນ |
| | | -ຮ່ວມມືກັບທີມງານທີ່ມີຫຼາກຫຼາຍວິຊາຊີບ ໃນ | ປະຕິບັດການພະຍາບານ ພາຍໃຕ້ | ຮ່ວມສະແດງຄວາມຄິດເຫັນຂອງຕົນຕໍ່ທີມ | ຂັບຂວາຍທີມງານໃຫ້ປະຕິບັດວຽກງານ | -ມີຄວາມຊຳນານ, ແລະໃຫ້ຄຳປຶກສາ ໃນ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ສະຖານທີ່ບໍລິການປິ່ນປົວທຸກຂັ້ນ. | ຄຳແນະນຳຈາກພະຍາບານ ຜູ້ມີປະສົບການໃນການປະຕິບັດຕົນໃຫ້ມີທັດສະນະຄະຕິທີ່ດີ ຕໍ່ທີມງານທີ່ມີຫຼາກຫຼາຍສາຂາ ວິຊາຊີບ | ງານຜູ້ອື່ນ ຕາມເຕັກນິກວິຊາການວິຊາຊີບຢ່າງເປີດເຜີຍ;<br>-ສ້າງສຳພັນທະພາບ ແລະ ກ້າສະແດງອອກໃນການສື່ສານກັບຜູ້ຮັບບໍລິການ ແລະ ເພື່ອນຮ່ວມງານດ້ວຍມາລະຍາດທີ່ສຸພາບຮຽບຮ້ອຍ, ວາຈານິ້ມນວນ, ແລະຈິງໃຈ , ພາຍໃຕ້ຂອບເຂດການປະຕິບັດການພະຍາບານ ມີກິລິຍາທ່າທາງທີ່ເໝາະສົມ, ບໍ່ບິດເບືອນອ້າງຂໍ້ຍົກເວັ້ນໃຫ້ຕົນເອງ | ໂດຍຄຳນຶງເຖິງ ກຽດສັກສີ, ຊື່ສຽງຂອງບຸກຄົນ, ກຸ່ມຄົນ ແລະ ໜ່ວຍງານ (ທີມງານທີ່ມີຄວາມຫຼາກຫຼາຍດ້ານວິຊາຊີບ) ຕາມຂອບເຂດການປະຕິບັດການພະຍາບານທີ່ຕົນຮັບຜິດຊອບ. | ການສະແດງອອກໃນການປະຕິບັດການພະຍາບານວິຊາຊີບ,<br>-ຊຸກຍູ້ ສົ່ງເສີມພາລະບົດບາດພະຍາບານໃຫ້ສູງຂື້ນ ສາມາດຮ່ວມມືກັບທີມງານວິຊາຊີບ ໃນສະຖານທີ່ການປິ່ນປົວສຸຂະພາບໃນທຸກຂັ້ນ. |
| | 1.2 ຄວາມຮັບຜິດຊອບ | ສະແດງອອກໃນການໃຫ້ບໍລິການພະຍາບານຕາມຫຼັກການ ແລະ ເຕັກນິກທີ່ | -ສະແດງໃຫ້ເຫັນເຖິງຄວາມມີສະຕິ, ມີຄວາມພາກພູມໃຈໃນ | ຍອມຮັບ ປະຕິບັດການພະຍາບານ ແລະ ໃຫ້ການບໍລິການວິຊາ | ສາມາດວິເຄາະ ແລະ ກຳນົດບັນຫາທີ່ເກີດຈາກການປະຕິບັດ | ມີຄວາມຊຳນານ, ແລະເປັນທີ່ປຶກສາໃນ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ຖືກຕ້ອງດ້ວຍຄວາມເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບ | ວິຊາຊີບການພະຍາບານ ໂດຍພະຍາບານຜູ້ມີປະສົບການມອບໝາຍງານ ແລະ ຕິດຕາມການປະຕິບັດການພະຍາບານ. | ຊີບພະຍາບານ ດ້ວຍຄວາມເອົາໃຈໃສ່ ແລະ ມີຄວາມຮັບຜິດຊອບ. | ການພະຍາບານຕາມຂອບເຂດການພະຍາບານ -ເຈລະຈາ ໃນການຮັກສາສິດ ແລະ ຂອບເຂດວຽກງານພະຍາບານທີ່ຕົນຮັບຜິດຊອບໄດ້. | ວຽກງານທີ່ຕົນຮັບຜິດຊອບ -ສົ່ງເສີມ ແລະ ເປັນຕົວແບບໃນການປະຕິບັດໜ້າທີ່ ທີ່ມີຄວາມຮັບຜິດຊອບເພື່ອການບັນລຸເປົ້າໝາຍ ຫນ່ວຍງານ ແລະອົງກອນທີ່ມີຄຸນນະພາບ. |
| | | | ສະແດງອອກໃຫ້ເຫັນຖືງຄວາມເອົາໃຈໃສ່ ແລະ ຄວາມຮັບຜິດຊອບວິຊາຊີບເຊັ່ນ: ການປະຕິບັດລະບຽບລັດຖະກອນ ແລະ ລະບຽບພາຍໃນອົງກອນໂດຍປະເມີນຈາກພະຍາບານຜູ້ມີປະສົບການ | ສົນໃຈເຂົ້າຮ່ວມການສົນທະນາ ແລະ ການແລກປ່ຽນຄວາມຮູ້, ຂໍ້ມູນຂ່າວສານ ເພື່ອເຮັດໃຫ້ວຽກງານສຳເລັດ ແລະ ບັນລຸຕາມເປົ້າໝາຍທີ່ຕັ້ງໄວ້. | ກໍລະນີປະສົບກັບສະຖານະການທີ່ເກີນຄວາມຮູ້ຄວາມສາມາດ ຫຼື ຢູ່ນອກຂອບເຂດ ວຽກງານ ຂອງຕົນເອງ. ຕ້ອງຂໍຄຳປຶກສາເພື່ອແກ້ໄຂບັນຫາໃຫ້ທັນກັບສະພາບການ. | ມີຄວາມຊຳນານ ແລະ ໃຫ້ຄຳປຶກສາໃນການຕິດຕາມປະເມີນຄຸນນະພາບການປະຕິບັດເຮັດວຽກງານ ແລະ ຄວາມສຳເລັດ ຂອງເພື່ອນຮ່ວມງານ ການປະຕິບັດວຽກງານສຳເລັດ ຕາມຂອບເຂດການຈັດຕັ້ງປະຕິບັດ. |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| 2. **ການປະຕິບັດການພະຍາບານວິຊາຊີບ** (Professional Nursing Practice) | 2.1 ໃຫ້ການບໍລິການທີ່ດີ Service mind) ແກ່ຜູ້ຮັບບໍລິການ | ໃຫ້ການບໍລິການທີ່ດີດ້ວຍໃຈ<br>- ທັກທາຍສະບາຍດີດ້ວຍຄວາມຍິ້ມແຍ້ມແຈ່ມໃສ;<br>- ສະແດງອອກໃນການເວົ້າຈາສຸພາບ, ແລະ ເຄົາລົບຜູ້ຮັບ ບໍລິການ;<br>- ຮັບຟັງ, ຕອບຮັບ, ດ້ວຍການເວົ້າ, ນໍາໃຊ້ສັນຍາລັກ, ໃຊ້ອຸປະກອນການສື່ສານໃນການຂຽນ ທີ່ມີປະສິດທິພາບຕໍ່ຜູ້ຮັບບໍລິການ ແລະ ທີມສຸຂະພາບ;<br>- ສັງເກດ ຄວາມຮູ້ສຶກ ແລະ ພຶດຕິກໍາທີ່ຕ້ອງການ ຂອງຜູ້ຮັບບໍລິການ; | ເຄົາລົບຄວາມຮູ້ສຶກ ແລະ ພຶດຕິກໍາທີ່ຕ້ອງການບໍລິການດ້ານສຸຂະພາບຂອງຜູ້ຮັບໃຊ້ບໍລິການແຕ່ລະບຸກຄົນ ແລະ ຄອບຄົວ | ແນະນໍາ ການບໍລິການດ້ານສຸຂະພາບທີ່ຜູ້ຮັບບໍລິການສົນໃຈ, ເລືອກ ແລະຕັດສິນໃຈໃຊ້ການບໍລິການ | ສະໜອງການບໍລິການສຸຂະພາບແບບໃໝ່ທັນສະໄໝ ໃຫ້ຜູ້ຮັບບໍລິການຮັບຮູ້ ແລະ ໃຫ້ບໍລິການພະຍາບານທີ່ມີຫົວຄິດປະດິດສ້າງໂດຍຄໍານຶງເຖິງຄວາມຄຸ້ມຄ່າ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ແກ່ຜູ້ຮັບບໍລິການ. | ເປັນຕົວແບບໃນການໃຫ້ບໍລິການທີ່ດີ ແລະ ສິ່ງເສີມທີມງານທີ່ມີຄວາມຫຼາກຫຼາຍທາງວິຊາຊີບໃນການຝຶກຊ້ອມເພື່ອໃຫ້ມີຄວາມສໍາພັນທີ່ດີຂຶ້ນກັບຜູ້ຮັບບໍລິການ ແລະ ຄອບຄົວຂອງເຂົາເຈົ້າ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | - ມີສຳພັນທະພາບທີ່ດີກັບຜູ້ຮັບບໍລິການ;<br>- ໃຫ້ຂໍ້ມູນທີ່ຈຳເປັນແກ່ຜູ້ຮັບບໍລິການດ້ານການປິ່ນປົວ;<br>- ໃຫ້ບໍລິການພະຍາບານທີ່ມີຫົວຄິດປະດິດສ້າງ ໂດຍ<br>ຄຳນຶງເຖິງຄວາມຮູ້ສຶກຂອງຜູ້ຮັບບໍລິການ ແລະ ຄອບຄົວ; | | | | |
| | | • ເທັກນິກປະຕິບັດການພະຍາບານ<br>-ໃຫ້ບໍລິການພະຍາບານທີ່ຖືກຕ້ອງຕາມມາດຕະຖານວິຊາຊີບທີ່ຖືກຕ້ອງ ເໝາະສົມ ເພື່ອໃຫ້ເກີດ ຄວາມປະທັບໃຈ ແລະ ປອດໄພແກ່ຜູ້ຮັບບໍລິການ; | ສະແດງອອກໃນການບໍລິການພະຍາບານດ້ວຍການເວົ້າຈາສຸພາບ, ອ່ອນນ້ອມຖ່ອມຕົວ ແລະ ຍິນດີຕ້ອນຮັບຜູ້ຮັບບໍລິການ ໂດຍມີພະຍາບານຜູ້ມີປະສົບການໃຫ້ຄຳແນະນຳ ແລະ ຕິດຕາມ | ເຂົ້າໃຈ ແລະ ຂໍຄຳປຶກສາ ຈາກພະຍາບານ ຜູ້ຊ່ຽວຊານ ເມື່ອພົບບັນຫາ ດ້ານການບໍລິການພະຍາບານຕໍ່ຜູ້ຮັບບໍລິການ ແລະ ຄອບຄົວຂອງເຂົາເຈົ້າ<br>- ໃຫ້ບໍລິການພະຍາບານທີ່ຖືກຕ້ອງ | ວິເຄາະ ແລະ ກຳນົດບັນຫາທີ່ເກີດຂື້ນໃນຂະນະໃຫ້ການບໍລິການສຸຂະພາບ ຕໍ່ຜູ້ຮັບບໍລິການ ແລະ ຄອບຕົວຂອງເຂົາເຈົ້າ<br>-ພິຈາລະນາ ແລະ ຕັດສິນໃຈໃນການແກ້ໄຂບັນຫາ ການບໍລິ | -ມີຄວາມຊຳນານ ແລະ ເປັນຕົວແບບໃນການສະແດງອອກເຖິງ ຄວາມຍິນດີຕ້ອນຮັບຜູ້ຮັບບໍລິການ.<br>-ອະທິບາຍ ແລະ ຖ່າຍທອດຄວາມຮູ້ເທັກນິກ ແລະ ປະສົບ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | -ເທັກນິກປະຕິບັດການພະຍາບານ | | ການປະພຶດຂອງພະຍາບານຈົບໃໝ່ | ຕາມມາດຕະຖານວິຊາຊີບທີ່ຖືກຕ້ອງ ເໝາະສົມເພື່ອໃຫ້ເກີດຄວາມປະທັບໃຈ ແລະ ປອດໄພ ແກ່ຜູ້ຮັບບໍລິການ; | ການ ສຸຂະພາບທີ່ເໝາະສົມຄື ມີຄວາມສຸພາບຮຽບຮ້ອຍ, ອ່ອນນ້ອມ ແລະ ຍິນດີຕ້ອນຮັບຜູ້ຮັບບໍລິການ ເພື່ອສ້າງສາຍສຳພັນທີ່ດີ ແລະ ສ້າງຄວາມເພິ່ງພໍໃຈໃນການບໍລິການທີ່ດີຂອງຜູ້ຮັບບໍລິການ | ການໃນການບໍລິການສຸຂະພາບທີ່ດີ ແລະ ໄດ້ມາດຕະຖານ ແກ່ພະຍາບານ ແລະ ບຸກຄະລາກອນໃນທີມສຸຂະພາບຢ່າງຕໍ່ເນື່ອງ<br>- ສົ່ງເສີມການໃຫ້ການບໍລິການທີ່ດີໃນອົງກອນ ເພື່ອ ສ້າງຄວາມປະທັບໃຈແກ່ຜູ້ຮັບບໍລິການ ແລະ ຄອບຄົວຂອງເຂົາເຈົ້າ |
| | | | ໃຫ້ການບໍລິການພະຍາບານຕາມເທັກນິກທີ່ຖືກຕ້ອງຕາມຫລັກປະຕິບັດການພະຍາບານທີ່ພາຍໃຕ້ຄຳແນະນຳ | ສະແດງອອກເຖິງການບໍລິການຂໍຄຳປຶກສາຈາກພະຍາບານທີ່ມີປະສົບການໃນການປະຕິບັດເທັກນິກການພະຍາບານທີ່ສັບສົນໃຫ້ຖືກຕ້ອງຕາມ | ໃຫ້ຂໍ້ມູນ, ຄວາມຮູ້ກ່ຽວກັບວິເຄາະບັນຫາ ແລະ ກຳນົດຄວາມຕ້ອງການ ການບໍລິການພະຍາບານຂອງຜູ້ຮັບບໍລິການ ແລະ ຕັດສິນໃຈໃນການ | ໃຫ້ບໍລິການພະຍາບານທີ່ມີມີຄວາມຊຳນານ ແລະ ເປັນຕົວແບບໃນການມີຫົວຄິດປະດິດ ສ້າງໃນການປະຕິບັດເທັກນິກການພະຍາບານ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | ຂອງພະຍາບານທີ່ມີປະສົບການ. | ຫລັກການປະຕິບັດການພະຍາບານ. | ປະຕິບັດເທັກນິກໂດຍໃຊ້ຫລັກຖານທາງວິທະຍາສາດໃນການດູແລ. | ໂດຍຄໍານຶງເຖິງຄວາມຮູ້ສຶກຂອງຜູ້ຮັບບໍລິການ ແລະ ຄອບຄົວ |
| | 2.2 ນໍາໃຊ້ຫຼັກການຄວາມປອດໄພໃນການໃຫ້ບໍລິການສຸຂະພາບ | - ຈັດສະພາບແວດລ້ອມທີ່ເໝາະສົມ ແລະ ປອດໄພ ແກ່ຜູ້ຮັບ ແລະ ຜູ້ໃຫ້ບໍລິການ | ປະເມີນບັນຫາສະພາບແວດລ້ອມທີ່ມີຜົນກະທົບຕໍ່ການປະຕິບັດການພະຍາບານ, ຜູ້ຮັບບໍລິການ ແລະ ຄອບຄົວ ພາຍໃຕ້ຄໍາແນະນໍາຂອງພະຍາບານທີ່ມີປະສົບການ | ຂໍຄໍາປຶກສາພະຍາບານທີ່ມີປະສົບການເພື່ອການແກ້ໄຂຄວາມສ່ຽງທີ່ເກີດຂຶ້ນກັບຄົນເຈັບ, ຄອບຄົວ, ສະພາບແວດລ້ອມ ແລະ ການດູແລສຸຂະພາບ.<br>-ຈັດສະພາບແວດລ້ອມທີ່ຫຼຸດຜ່ອນຄວາມສ່ຽງຕໍ່ການປະຕິບັດການພະຍາບານ ແລະ ຜູ້ຮັບບໍລິການ. | ວິເຄາະ ແລະ ຈັດລຽງລໍາດັບຄວາມສໍາຄັນຂອງຄວາມສ່ຽງຕໍ່ການເຈັບປ່ວຍ ຂອງຜູ້ຮັບບໍລິການ.<br>-ພິຈາລະນາແນວທາງ ປ້ອງກັນຄວາມສ່ຽງທີ່ອາດເກີດຕໍ່ການເຈັບປ່ວຍ ຂອງຜູ້ຮັບບໍລິການ.<br>-ຈັດສະພາບແວດລ້ອມທີ່ສົ່ງເສີມຄວາມປອດໄພ ໃຫ້ແກ່ຜູ້ຮັບບໍລິການ. | ມີຄວາມຊໍານານ ແລະ ເປັນຕົວແບບໃນຈັດສະພາບແວດລ້ອມທີ່ປອດໄພ ໃນການບໍລິການສຸຂະພາບ ໂດຍໃຊ້ຫລັກຖານທາງວິທະຍາສາດ ເພື່ອຄວາມປອດໄພ ແກ່ຜູ້ຮັບບໍລິການ, ຄອບຄົວ ແລະ ຊຸມຊົນ. |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | - ປະຕິບັດຫຼັກການກັນການຕິດເຊື້ອແບບມາດຕະຖານ | ປະເມີນບັນຫາ ການຕິດເຊື້ອໃນການດູແລຄົນເຈັບ ຄອບຄົວ ພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ. | ຂໍຄຳປຶກສາພະຍາບານທີ່ມີປະສົບການ ໃນການປະຕິບັດຕາມຫຼັກການກັນ ແລະ ຄວບຄຸມການຕິດເຊື້ອແບບມາດຕະຖານໃຫ້ຖືກຕ້ອງກັບແຕ່ລະເທັກນິກການບໍລິການພະຍາບານ ໃນສະຖານການບໍລິການສຸຂະພາບ. | ວິເຄາະບັນຫາ ແລະ ຈັດລຽງລຳດັບຄວາມສຳຄັນສຳຄັນຂອງຕ່ອງໂສ້ການຕິດເຊື້ອໃຫ້ກະຈ່າງແຈ້ງ.<br>- ປະຕິບັດການກັນແບບ ມາດຕະຖານຢ່າງເຄັ່ງຄັດໃນການບໍລິການສຸຂະພາບຜູ້ຮັບບໍລິການ. | ມີຄວາມຊຳນານ ແລະ ເປັນຕົວແບບ ການປະຕິບັດການກັນແບບມາດຕະຖານ ໃນການໃຫ້ບໍລິການສຸຂະພາບແກ່ຜູ້ຮັບບໍລິການຢ່າງເຄັ່ງຄັດ. |
| | | -ປະຕິບັດຕາມຂອບເຂດການພະຍາບານ. | ພະຍາບານສາມາດຕັດສິນໃຈໃນປະຕິບັດຕາມຂອບເຂດການພະຍາບານດ້ວຍຕົນເອງ. | ພະຍາບານສາມາດຕັດສິນໃຈໃນປະຕິບັດຕາມຂອບເຂດການພະຍາບານ ດ້ວຍຕົນເອງ, ປະຕິບັດຕາມໃບສັ່ງຂອງທ່ານໝໍ. | ພະຍາບານສາມາດຕັດສິນໃຈໃນປະຕິບັດການພະຍາບານດ້ວຍຕົນເອງ, ປະຕິບັດຕາມໃບສັ່ງຂອງທ່ານໝໍ ແລະປະຕິບັດການດູແລຄົນເຈັບໂດຍມີທ່ານໝໍຢູ່ນຳ. | ພະຍາບານສາມາດຕັດສິນໃຈໃນປະຕິບັດການພະຍາບານດ້ວຍຕົນເອງ, ປະຕິບັດຕາມໃບສັ່ງຂອງທ່ານໝໍ ແລະປະຕິບັດການດູແລຄົນເຈັບໂດຍມີທ່ານໝໍຢູ່ນຳ, ປະຕິບັດພາຍໃຕ້ຄູ່ມື |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | | | ແນະນຳ ແລະ ກົດລະບຽບຂອງອົງການອະນາໄມໂລກ. |
| | | - ເປັນເຈົ້າການໃນການພັດທະນາຄຸນນະພາບການບໍລິການຢ່າງຕໍ່ເນື່ອງ. | ປະເມີນບັນຫາ ຫລືຊ່ອງ ວ່າງໃນການບໍລິການພະຍາບານແກ່ຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ | ກຳນົດບັນຫາ ແລະ ຂໍຄຳປຶກສາຈາກພະຍາບານຜູ້ມີປະສົບການໃນການ ວາງແຜນການປັບປຸງຄຸນນະພາບການບໍລິການພະຍາບານແກ່ຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນ | ຈັດລຳດັບຄວາມສຳຄັນຂອງບັນຫາ ແລະ ກຳນົດຄວາມຕ້ອງການ ແລະ ວາງແຜນການປະຕິບັດໃນການພັດທະນາຄຸນນະພາບການບໍລິການພະຍາບານ ໂດຍຄຳນຶງເຖິງປອດໄພ ແລະມີປະສິດທິພາບແກ່ຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນ | ມີຄວາມຊຳນານ ໃນການປະເມີນ, ວິເຄາະບັນຫາ, ກຳນົດ ແລະ ຈັດລະດັບຄວາມຄວາມຕ້ອງການ ເພື່ອວາງແຜນການປະຕິບັດການພະຍາບານ ໂດຍນຳໃຊ້ຫລັກຖານທາງວິທະຍາສາດໃນການບໍລິການພະຍາບານທີ່ມີຄຸນນະພາບສູງ ແກ່ຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນຢ່າງຕໍ່ເນື່ອງ |
| | 2.3 ນຳໃຊ້ຂະບວນການພະຍາບານໃນ | - ນຳໃຊ້ຂະບວນການພະຍາບານໃນການໃຫ້ | - ມີຄວາມຮູ້, ຄວາມເຂົ້າໃຈ, ມີທັກສະ, | ໃຊ້ຂະບວນການພະຍາບານໃນການດູ | ນຳໃຊ້ຂະບວນການໃນການດູແລ | - ມີຄວາມຊຳນານ ແລະເປັນທີ່ປຶກສາໃນ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | ການດູແລ ຜູ້ຮັບບໍລິການ ລວມທັງການບັນທຶກ ແລະ ການລາຍງານ | ການ ພະຍາບານແກ່ຜູ້ຮັບບໍລິການແບບອົງລວມ ໃນການສົ່ງເສີມ, ການກັນ ພະຍາດ, ການດູແລ ປິ່ນປົວ ແລະ ການຟື້ນຟູສຸຂະພາບ ເຊັ່ນ:<br>-ປະເມີນສຸຂະພາບ ແລະ ກຳນົດບັນຫາສຸຂະພາບ,<br>-ບົ່ງມະຕິທາງການພະຍາບານ,<br>-ວາງແຜນການພະຍາບານ,<br>-ປະຕິບັດການ, ພະຍາບານ,<br>-ປະເມີນຜົນໄດ້ຮັບຈາກການພະຍາບານ ແລະ<br>-ບັນທຶກການພະຍາບານໃຫ້ຖືກຕ້ອງ ແລະ ຄົບຖ້ວນ; | ແລະທັດສະນະຄະຕິໃນການປະເມີນບັນຫາສຸຂະພາບຂອງຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນ<br>-ຈັດລຽງບັນຫາສຸຂະພາບ,<br>-ການບົ່ງມະຕິທາງການພະຍາບານ,<br>-ວາງແຜນ ແລະ ປະຕິບັດຕາມແຜນການພະຍາບານ,<br>-ປະເມີນຜົນທີ່ໄດ້ຮັບ ແລະ ບັນທຶກການພະຍາບານ ພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ. | ແລຜູ້ຮັບບໍລິການໃນກໍລະນີກໍລະນີທີ່ເບົາບາງໃນການ ປະເມີນບັນຫາ ສຸຂະພາບຂອງຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນ<br>-ຈັດລຽງບັນຫາສຸຂະພາບ,<br>-ການບົ່ງມະຕິທາງການພະຍາບານ,<br>-ວາງແຜນ ແລະ ປະຕິບັດຕາມແຜນການພະຍາບານ,<br>-ປະເມີນຜົນທີ່ໄດ້ຮັບ ແລະ ບັນທຶກການພະຍາບານດ້ວຍຕົນເອງ.<br>-ນຳໃຊ້ທິດສະດີທາງການພະຍາບານ ແລະ ຂໍຄຳປຶກສານຳ | ສຸຂະພາບຜູ້ຮັບບໍລິການໃນກໍລະນີເຈັບໜັກ, ໃນການ ປະເມີນບັນຫາ ສຸຂະພາບຂອງຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນ<br>-ຈັດລຽງບັນຫາສຸຂະພາບ, -ການບົ່ງມະຕິທາງການພະຍາບານ,<br>-ວາງແຜນ ແລະ ປະຕິບັດຕາມແຜນການພະຍາບານ,<br>-ປະເມີນຜົນທີ່ໄດ້ຮັບ ແລະ ບັນທຶກການພະຍາບານ<br>-ສ້າງ ຄູ່ມືການປະຕິບັດການພະຍາບານໃນການ | ການ ປະເມີນບັນຫາສຸຂະພາບຂອງຜູ້ຮັບບໍລິການ ຄອບຄົວ ແລະຊຸມຊົນ<br>-ຈັດລຽງບັນຫາສຸຂະພາບ,<br>-ການບົ່ງມະຕິທາງການພະຍາບານ,<br>-ວາງແຜນ ແລະ ປະຕິບັດຕາມແຜນການພະຍາບານ,<br>-ປະເມີນຜົນທີ່ໄດ້ຮັບ, ການລາຍງານ ແລະ ບັນທຶກການພະຍາບານ<br>-ສາມາດຖ່າຍທອດຄວາມຮູ້ການໃຊ້ຂະບວນການໃນການດູແລສຸຂະພາບຜູ້ຮັບ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | ພະຍາບານຜູ້ມີປະສົບການໃນການເລືອກໃຊ້ຫລັກຖານທາງວິທະຍາສາດ ແລະ ເທັກໂນໂລຍີ ເຂົ້າໃນແຜນ ແລະ ການປະຕິບັດການດູແລສຸຂະພາບຂອງຜູ້ຮັບບໍລິການ. | ສົ່ງເສີມ, ການກັນພະຍາດ, ການດູແລປິ່ນປົວ ແລະການຟື້ນຟູສຸຂະພາບ ຂອງຜູ້ຮັບບໍລິການ ແລະຄອບຄົວຊຸມຊົນ.<br><br>-ສ້າງລະບຽບຫລັກການ, ນະໂຍບາຍ, ມາດຕະຖານຂະບວນການພະຍາບານໃນການສົ່ງເສີມ ປ້ອງກັນດູ ແລະ ຟື້ນຟູຜູ້ | ບໍລິການ ແກ່ພະຍາບານ ແລະ ບຸກຄະລາກອນສຸຂະພາບ<br>- ພັດທະນາລະບົບການນໍາໃຊ້ຂະບວນການພະຍາບານເພື່ອປະດິດສ້າງຄຸນນະພາບໃນການພະຍາບານໃຫ້ສູງຂື້ນແບບມືອາຊີບ. |
| | 2.4. ການສອນ ແລະ ການໃຫ້ຄໍາປຶກສາ (Teaching and Counseling) | - ໃຫ້ຄວາມຮູ້, ຂ່າວສານ ແລະ ການຊ່ວຍເຫຼືອໃນການແກ້ໄຂບັນຫາສຸຂະພາບຂອງຜູ້ຮັບບໍລິການເປັນບຸກຄົນ, | ການໃຫ້ຂໍ້ມູນ ແລະ ສຸຂະສຶກສາກ່ຽວກັບບັນຫາສຸຂະພາບທົ່ວໄປແກ່ບຸກຄົນ, ຄອບຄົວ ແລະ ຊຸມຊົນພາຍໃຕ້ຄໍາແນະນໍາ | ຂໍຄໍາປຶກສາພະຍາບານຜູ້ມີປະສົບການ ແລະ ຜູ້ຊ່ຽວຊານໃນການໃຫ້ຂໍ້ມູນ, ສຸຂະສຶກສາກ່ຽວກັບບັນຫາສຸຂະພາບທີ່ | ວິເຄາະບັນຫາ ແລະຄວາມຕ້ອງການຂໍ້ມູນ, ກໍານົດຫົວຂໍ້, ເຕັກນິກ ແລະວິທີການໃຫ້ສຸຂະສຶກສາກ່ຽວກັບບັນຫາສຸຂະພາບທີ່ | -ມີຄວາມຊໍານານ ແລະ ປະຕິບັດຕົນເປັນຕົວແບບພະຍາບານໃນການໃຫ້ຂໍ້ມູນ, ການໃຫ້ສຸຂະສຶກສາກ່ຽວກັບ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ເປັນກຸ່ມໃນໂຮງໝໍ ແລະ ຊຸມຊົນ<br>- ສົ່ງເສີມ, ສະໜັບສະໜູນ ແລະ ສອນໃຫ້ຜູ້ຮັບບໍລິການເກີດການຮຽນຮູ້ ແລະ ສາມາດດູແລສຸຂະພາບຕົນເອງ. | ຂອງພະຍາ ບານທີ່ມີປະສົບການ. | ຊັບຊ້ອນແກ່ບຸກຄົນ, ຄອບຄົວ ແລະ ຊຸມຊົນ. | ຊັບຊ້ອນຫລາຍຂຶ້ນແກ່ບຸກຄົນ, ຄອບຄົວ ແລະ ຊຸມຊົນ | ບັນຫາສຸຂະພາບທີ່ຊັບຊ້ອນແກ່ບຸກຄົນ, ຄອບຄົວ ແລະ ຊຸມຊົນ.<br>-ສົ່ງເສີມ ແລະ ຖ່າຍທອດຄວາມຮູ້ ໃນການວິເຄາະບັນຫາ ແລະ ກຳນົດຄວາມຕ້ອງການຂໍ້ມູນ, ເທັກນິກ ແລະ ວິທີການໃຫ້ສຸຂະສຶກສາກ່ຽວກັບບັນຫາສຸຂະພາບໃຫ້ແກ່ພະຍາບານ ແລະ ບຸກຄະລາກອນສຸຂະພາບຢ່າງຕໍ່ເນື່ອງ |
| | | - ສອນ ແນະນຳ ແລະ/ຫຼືສາທິດວິທີປະຕິບັດ ການດູແລ ຄົນເຈັບສະເພາະພະຍາດ | ໃຊ້ຄວາມຮູ້ ແລະ ທັກສະການສອນເພື່ອປັບປ່ຽນພຶດຕິກຳໃນການດູແລສຸຂະພາບສະເພາະພະຍາດໃນ ການ | ຂໍຄຳປຶກສາກັບພະຍາບານຜູ້ມີປະສົບການກ່ຽວກັບ ແນວຄິດ ແລະວິທີການສອນການປັບປ່ຽນພຶດຕິກຳ | ວິເຄາະບັນຫາ ແລະ ກຳນົດຄວາມຕ້ອງການໃນການວາງແຜນການສອນແລະແນວທາງການ | ມີຄວາມຊຳນານ ໃນການໃຊ້ທິດສະດີທີ່ກ່ຽວຂ້ອງແລະການຕັ້ງເປົ້າໝາຍເພື່ອເປັນແນວທາງໃນການ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | ດຳລົງຊີວິດ ຂອງຜູ້ຮັບບໍລິການ ແລະ ຄອບຄົວ ພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ. | ການດູແລສຸຂະພາບສະເພາະພະຍາດ ໃນການດຳລົງຊີວິດ ຂອງຜູ້ຮັບບໍລິການ ແລະ ຄອບຄົວ. | ປະຕິບັດໃຫ້ເກີດການປ່ຽນແປງພຶດຕິກຳສຸຂະພາບໃນການດຳລົງຊີວິດ ໂດຍນຳໃຊ້ຄວາມຮູ້ຈາກທິດສະດີ, ປະສົບການ ແລະ ຫລັກຖານທາງວິທະຍາສາດ ມາໃຊ້ໃນການໃຫ້ຄຳແນະນຳ ແລະ ການສອນ. | ປ່ຽນແປງພຶດຕິກຳໃນການດຳລົງຊີວິດ.<br>- ສອນ ແນະນຳ, ຝຶກປະຕິບັດ ການດູແລຄົນເຈັບສະເພາະພະຍາດ.<br>- ໃຫ້ຄຳປຶກສາແກ່ຜູ້ຮັບບໍລິການ, ຄອບຄົວ ແລະ ຊຸມຊົນ. |
| | 2.5 ການບໍລິການທີ່ເຂົ້າເຖິງກຸ່ມເປົ້າໝາຍ (Proactive Service - Health Care Coverage) | -ປະເມີນບັນຫາສຸຂະພາບ, ລະບຸຄວາມຕ້ອງການສະເພາະໃນການເຂົ້າເຖິງການບໍລິການສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ | -ປະເມີນບັນຫາສຸຂະພາບ, ລະບຸຄວາມຕ້ອງການສະເພາະ ໃນການເຂົ້າເຖິງການບໍລິການສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນພາຍໃຕ້ຄຳແນະນຳ | ຂໍຄຳປຶກສາ ຈາກພະຍາບານທີ່ມີປະສົບການ ໃນການ ວິເຄາະບັນຫາ ທີ່ຫຍຸ້ງຍາກ ແລະ ຄວາມຕ້ອງການເຂົ້າເຖິງການບໍລິການສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ | ວິເຄາະບັນຫາ ທີ່ຫຍຸ້ງຍາກ ແລະ ກຳນົດຄວາມຕ້ອງການ ແລະ ຕັດສິນໃຈທາງເລືອກແບບແຜນການປິ່ນປົວສຸຂະພາບທີ່ເໝາະສົມ ຂອງຜູ້ຮັບບໍລິການ, ຄອບຄົວ | -ມີຄວາມຊ່ຽວຊານ ແລະ ເປັນຕົວແບບໃນການ ວິເຄາະບັນຫາສຸຂະພາບ, ກຳນົດຄວາມຕ້ອງການ ແລະ ຕັດສິນໃຈທາງເລືອກແບບແຜນການປິ່ນປົວສຸຂະພາບທີ່ເໝາະສົມ ຂອງຜູ້ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | ຂອງພະຍາບານທີ່ມີປະສົບການ | | ແລະ ຊຸມຊົນ ທີ່ມີຄວາມຄຸ້ມຄ່າ ຄຸ້ມທຶນໃນການບໍລິການສຸຂະພາບ | ຮັບບໍລິການ, ຄອບຄົວ ແລະ ຊຸມຊົນ ທີ່ມີຄວາມຄຸ້ມຄ່າ ຄຸ້ມທຶນໃນການບໍລິການສຸຂະພາບ |
| | | - ສົ່ງເສີມການບໍລິການສຸຂະພາບທີ່ມີຄຸນນະພາບສູງຕໍ່ບັນຫາສຸຂະພາບທີ່ຄາດຫວັງຂອງບຸກຄົນ, ຄອບຄົວ ແລະຊຸມຊົນ. | ປະເມີນຄວາມຕ້ອງການໃນການດູແລສຸຂະພາບ ພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ. | ຂໍຄຳປຶກສາ ນຳພະຍາບານທີ່ມີປະສົບການ ກ່ຽວກັບການປະຕິບັດການສົ່ງເສີມສຸຂະພາບ, ການນຳສົ່ງຜູ້ຮັບບໍລິການໄປສະຖານທີ່ບໍລິການປິ່ນປົວ ທີ່ມີເງື່ອນໄຂ.<br>-ແນະນຳຜູ້ຮັບບໍລິການນຳໃຊ້ ລະບົບປະກັນສຸຂະພາບ ຫຼື ກຸ້ມຕົນເອງ.. | ວິເຄາະຄວາມຕ້ອງການໃນການບໍລິການສຸຂະພາບຂອງຜູ້ຮັບບໍລິການ, ຄອບຄົວ ແລະຊຸມຊົນ.<br>-ສະໜັບສະໜູນການຕັດສິນໃຈຫາທາງເລືອກ ການປິ່ນປົວສຸຂະພາບ, ການນຳສົ່ງການນຳສົ່ງຜູ້ຮັບບໍລິການໄປສະຖານທີ່ບໍລິການປິ່ນປົວ ທີ່ມີເງື່ອນໄຂ.<br>-ແນະນຳຜູ້ຮັບບໍລິການນຳໃຊ້ ລະບົບ | ມີຄວາມຊຳນານໃນການໃຫ້ຄຳປຶກສາ, ແນະນຳ ແລະ ແນະແນວ ການໃຫ້ການບໍລິການສຸຂະພາບຂອງຜູ້ຮັບບໍລິການ ຄອບ ຄົວ ແລະຊຸມຊົນ.<br>- ສະໜັບສະໜູນການຕັດສິນໃຈຫາທາງເລືອກ ການປິ່ນປົວສຸຂະພາບ,<br>-ການນຳສົ່ງການນຳສົ່ງຜູ້ຮັບບໍລິການໄປ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | | ປະກັນສຸຂະພາບ ຫຼື ກຸ້ມຕົນເອງ. | ສະຖານທີ່ບໍລິການປິ່ນປົວ ທີ່ມີເງື່ອນໄຂ.<br>-ແນະນຳຜູ້ຮັບບໍລິການນຳໃຊ້ ລະບົບປະກັນສຸຂະພາບ ຫຼື ກຸ້ມຕົນເອງ. |
| | | - ປະເມີນຜົນໄດ້ຮັບກ່ຽວກັບການໃຫ້ບໍລິການສົ່ງເສີມສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ; | ສຶກສາຜົນໄດ້ຮັບກ່ຽວກັບການໃຫ້ບໍລິການສົ່ງເສີມສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ; ພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ | ຂໍຄຳປຶກສາ ກັບພະຍາບານທີ່ມີປະສົບການ ກ່ຽວກັບການບັນທຶກຂໍ້ມູນຜົນໃນທາງບວກ ແລະທາງລົບ ຈາກການບໍລິການສົ່ງເສີມສຸຂະພາບເພື່ອລາຍງານ ແລະເຜີຍແຜ່ປະໂຫຍດຂໍ້ມູນການສົ່ງເສີມສຸຂະພາບທີ່ມີຜົນຕໍ່ການດູແລສຸຂະພາບທີ່ມີຄຸນນະພາບຕໍ່ໄປ; | ວິເຄາະຄວາມຕ້ອງການໃນການບໍລິການສົ່ງເສີມສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ;<br>-ນຳໃຊ້ຮູບແບບການສົ່ງເສີມສຸຂະພາບທີ່ມີຄຸນນະພາບ ທີ່ມີຜົນຕໍ່ການດູແລສຸຂະພາບທີ່ມີຄຸນນະພາບຕໍ່ໄປ.<br>-ພິຈາລະນາ ແລະຕັດສິນໃຈ ປັບປຸງ ແລະ ແກ້ໄຂບັນຫາ | ມີຄວາມຊຳນານ ໃນການ ວິເຄາະ ແລະກຳນົດຄວາມຕ້ອງການ ໃນການບໍລິການສົ່ງເສີມສຸຂະພາບຂອງບຸກຄົນ, ຄອບຄົວ ແລະ ຊຸມຊົນ;<br>-ສົ່ງເສີມໃຫ້ພະຍາບານ ແລະ ບຸກຄະລາກອນສຸຂະພາບນຳໃຊ້ຮູບແບບການສົ່ງເສີມສຸຂະພາບທີ່ມີຄຸນນະພາບ ທີ່ມີຜົນຕໍ່ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | -ປຶກສາແນວທາງປັບປຸງ ແລະ ແກ້ໄຂບັນຫາການສົ່ງເສີມສຸຂະພາບໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ. | ການສົ່ງເສີມສຸຂະພາບໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ. | ການດູແລສຸຂະພາບທີ່ມີຄຸນນະພາບຕໍ່ໄປ.<br>-ພິຈາລະນາ ແລະ ຕັດສິນໃຈ ແລະ ອຳນວຍຄວາມສະດວກໃນປັບປຸງ ແລະ ແກ້ໄຂບັນຫາການສົ່ງເສີມສຸຂະພາບໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ. |
| | | - ມີສ່ວນຮ່ວມໃນການນຳພາສັງຄົມໃນໃຫ້ມີສ່ວນຮ່ວມກິດຈະກຳສຸຂະພາບ. | ມີສ່ວນຮ່ວມໃນການຊີ້ນຳສັງຄົມໃນດ້ານສຸຂະພາບ ແລະ ພິທັກສິດໃຫ້ກັບຄົນເຈັບ ຫລື ຜູ້ຮັບບໍລິການ ພາຍໃຕ້ການແນະນຳ ແລະ ການມອບໝາຍງານຂອງພະຍາບານຜູ້ມີປະສົບການ | ຂໍຄຳປຶກສາ ກັບພະຍາບານທີ່ມີປະສົບການ ກ່ຽວກັບການມີສ່ວນຮ່ວມໃນການບໍລິການພະຍາບານໃນການດູແລສຸຂະພາບຂອງປະຊາຊົນ, ການພິທັກສິດໃຫ້ກັບຄົນເຈັບ ຫລື | ພິຈາລະນາ ແລະ ຕັດສິນໃຈດ້ວຍຕົນເອງໃນການມີສ່ວນຮ່ວມໃນການບໍລິການພະຍາບານໃນການດູແລສຸຂະພາບຂອງປະຊາຊົນ, ການພິທັກສິດໃຫ້ກັບຄົນເຈັບ ຫລື ຜູ້ຮັບບໍລິການ.ໃນ | ມີຄວາມຊຳນານ ໃນການ ວິເຄາະ ແລະ ກຳນົດຄວາມຕ້ອງການ ແລະ ຈັດສັນພະຍາບານ ແລະ ວາງແຜນການບໍລິການສຸຂະພາບທີ່ສອດຄ່ອງກັບຄວາມຕ້ອງການບໍລິການ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | ຜູ້ຮັບບໍລິການ.ໃນສັງຄົມ ລວມທັງການໃຫ້ການບໍລິການໃນວັນສຳຄັນຂອງຊາດ. ເວລາມີການລະບາດ ແລະ ເກີດອຸທົກກະໄພ ແລະ ອື່ນໆ | ສັງຄົມ ລວມທັງການໃຫ້ການບໍລິການໃນວັນສຳຄັນຂອງຊາດ. ເວລາມີການລະບາດ ແລະ ເກີດອຸທົກກະໄພ ແລະ ອື່ນໆ | ສຸຂະພາບໃນສັງຄົມ ເຊັ່ນ: ໃຫ້ການບໍລິການພະຍາບານໃນວັນສຳຄັນຂອງຊາດ. ເວລາມີການລະບາດ ແລະ ເກີດອຸທົກກະໄພ ແລະ ອື່ນໆ |
| **3. ຄວາມເປັນຜູ້ນຳ ແລະ ການຄຸ້ມຄອງການພະຍາບານ** (Leadership and Nursing Management) | 3.1 ສະແດງບົດບາດການນຳພາໃນການໃຫ້ບໍລິການພະຍາບານ ທີ່ມີຄຸນນະພາບ (Leadership) ຄວາມເປັນຜູ້ນຳ | -ນຳໃຊ້ຫຼັກການຄວາມເປັນຜູ້ນຳ, ການຕິດຕາມ ຊຸກຍູ້ເພື່ອຊ່ວຍເຫລືອທີມງານ,<br>-ເປັນຕົວແບບ ໃນການບໍລິຫານຊັບພະຍາກອນ ແລະ ຈັດລະບົບການບໍລິການສຸຂະພາບໃຫ້ບັນລຸເປົ້າໝາຍຂອງໜ່ວຍງານ ແລະ ອົງກອນ. | -ເຂົ້າໃຈຫຼັກການຄວາມເປັນຜູ້ນຳໃນການປະຕິບັດການພະຍາບານ;<br>-ເຂົ້າໃຈຮູບແບບການນຳພາ ແລະ ວິທີການທີ່ແຕກຕ່າງໃນສະຖານະການທີ່ແຕກຕ່າງກັນ ພາຍໃຕ້ການແນະນຳພະຍາບານທີ່ມີປະສົບການ. | -ຂໍຄຳປຶກສາກັບພະຍາບານທີ່ມີປະສົບການກ່ຽວກັບ ການນຳພາ, ການອອກແບບ ການບໍລິຫານພະຍາບານໃຫ້ບັນລຸເປົ້າໝາຍຂອງໜ່ວຍງານ ແລະ ອົງກອນ;<br>-ຝຶກຝົນຕົນເອງປະຕິບັດບົດບາດກາຍເປັນສະມາຊິກໃນຮູບແບບການນຳພາ ແລະ ວິທີການ | ວິເຄາະບັນຫາ ແລະ ຈັດລຽງລຳດັບຄວາມສຳຄັນຂອງບັນຫາ, ປັບປຸງບົດບາດການນຳພາໃນການບໍລິຫານການບໍລິການສຸຂະພາບໃນໜ່ວຍງານ ແລະ ອົງກອນໃຫ້ບັນລຸເປົ້າໝາຍ. | ມີ ວິໄສທັດ, ພາລະກິດ ກຳນົດເປົ້າໝາຍ, ແລະ ນຳພາໃນການວາງແຜນການປະຕິບັດໃຫ້ທັນເວລາ.<br>- ເປັນຕົວແບບ ໃນການຂັບເຄື່ອນແຜນງານ ຈັດຕັ້ງປະຕິບັດກິດຈະກຳຕາມແຜນໃຫ້ສຳເລັດຕາມເວລາທີ່ກຳນົດ. |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | ທີ່ແຕກຕ່າງໃນສະຖານະການທີ່ແຕກຕ່າງກັນ. | | |
| | | - ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນທີມງານ. | ປະເມີນຂໍ້ຂັດແຍ່ງພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການເຊັ່ນ: ການສື່ສານບໍ່ຈະແຈ້ງ , ວິທີການບໍລິຫານ ແລະ ການປະຕິບັດວຽກງານໃນໜ່ວຍງານ ແລະ ອົງກອນ. | ຂໍຄຳປຶກສານຳພະຍາບານທີ່ມີປະສົບການຕໍ່ການປະເຊີນປະເຊີນໜ້າ ເພື່ອຜ່ອນຜັນຂໍ້ຂັດແຍ່ງ<br>-ໃຫ້ຄຳແນະນຳການໃຊ້ທັກສະການສື່ສານແລະກົນໄກຢ່າງມີປະສິດທິພາບ. | ວິເຄາະຂໍ້ຂັດແຍ່ງ ແລະ ພິຈາລະນາການຕັດສິນໃຈ ໃນການແກ້ໄຂຂໍ້ຂັດແຍ່ງຕາມຫລັກຖານຢ່າງ ສົມເຫດສົມຜົນທີ່ເກີດຂຶ້ນໃນໜ່ວຍງານແລະອົງກອນ ຢ່າງມີປະສິດທິພາບ. | ມີຄວາມຊຳນານ ໃນການວິເຄາະ ກຳນົດ ແລະຈັດລຽງລຳດັບຄວາມສຳຄັນຂອງຂໍ້ຂັດແຍ່ງໃນໜ່ວຍງານ ແລະ ອົງກອນ;<br>- ພິຈາລະນາແນວທາງໃນແກ້ໄຂຂໍ້ຂັດແຍ່ງ ແບບສ້າງສັນພາຍໃຕ້ຫລັກຈັນຍາທຳ, ຈັນຍາບັນມາດຕະຖານ ແລະ ຂອບ**ເຂດ**ວິຊາຊີບ. |
| | 3.2 ສະແດງບົດບາດໃນການຄຸ້ມຄອງ | ນຳໃຊ້ຫຼັກການຄຸ້ມຄອງເພື່ອບໍລິຫານຊັບພະຍາກອນ ແລະ | -ເຂົ້າໃຈຫຼັກການຄຸ້ມຄອງບໍລິຫານຊັບພະຍາກອນ ແລະ ລະບົບບການບໍລິການ | -ຂໍຄຳປຶກສາກັບພະຍາບານທີ່ມີປະສົບການ ກ່ຽວກັບການຄຸ້ມຄອງບໍລິຫານ | -ວິເຄາະບັນຫາ ແລະ ຈັດລຳດັບຄວາມສຳຄັນຂອງວຽກງານຄຸ້ມຄອງບໍລິຫານ | -ມີຄວາມຄວາມຊຳນານໃນການປະຕິບັດວຽກງານຄຸ້ມຄອງບໍລິຫານ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ລະບົບການບໍລິການພະຍາບານ. | ພະຍາບານ ໃນໜ່ວຍງານ ແລະ ອື່ງ ພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ<br>- ປະກອບສ່ວນເຂົ້າໃນການຖອດຖອນບົດຮຽນ ແລະ ປັບປຸງນະໂຍບາຍ, ແບບແຜນວິທີການເຮັດວຽກໃນໜ່ວຍງານ. | ຊັບພະຍາກອນ ແລະ ລະບົບ ແລະ ແບບແຜນວິທີການການບໍລິການພະຍາບານໃນໜ່ວຍງານ ແລະອົງກອນ.<br>-ໃຫ້ຄຳຄິດເຫັນ, ສະເໜີຄຳແນະນຳ ສຳລັບເມື່ອມີການປ່ຽນແປງ ແລະ ຈັດການກັບຜົນກະທົບຕໍ່ການປ່ຽນແປງການປະຕິບັດຂອງຕົນ ຫຼື ຕໍ່ໜ່ວຍງານຢ່າງມີປະສິດທິພາບ. | ຊັບພະຍາກອນ ແລະ ລະບົບ ແລະ ແບບແຜນວິທີການການບໍລິການພະຍາບານໃນໜ່ວຍງານ ແລະອົງກອນ.<br>-ປະກອບຄຳຄິດເຫັນ, ສະເໜີແນະເພື່ອການປ່ຽນແປງ ແລະ ບໍລິຫານຜົນກະທົບຕໍ່ຫຼັກການຄຸ້ມຄອງບໍລິຫານຊັບພະຍາກອນ ແລະ ລະບົບບການບໍລິການພະຍາບານ ຂອງໜ່ວຍງານຢ່າງມີປະສິດທິພາບ. | ຊັບພະຍາກອນ ແລະ ລະບົບ ແລະ ແບບແຜນວິທີການການບໍລິການພະຍາບານໃນໜ່ວຍງານ ແລະອົງກອນ.<br>-ຈັດລຽງລຳດັບຄວາມສຳຄັນຂອງວຽກງານ ແລະ ບໍລິຫານເວລາຢ່າງມີປະສິດທິພາບ ແລະ ພ້ອມຈັດສັນຊັບພະຍາກອນ ເພື່ອເພີ່ມປະສິດທິພາບຂອງວຽກງານໃຫ້ດີຂື້ນ.<br>-ພັດທະນາ ແລະ ດຳເນີນການຕິດຕາມ, ແລະ ປະເມີນຜົນນະໂຍບາຍທີ່ມີຜົນຕໍ່ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | | | ການບໍລິການພະຍາບານ. |
| | 3.3.ການສ້າງແຮງຈູງໃຈ | ນໍາໃຊ້ຫຼັກການສ້າງແຮງຈູງໃຈ | -ເຮັດວຽກກົງຕໍ່ເວລາ ແລະ ປະຕິບັດວຽກງານຢ່າງຄົບຖ້ວນ.<br>-ປະຕິບັດຕາມການມອບໝາຍໂດຍອີງຕາມມາດຕະຖານການພະຍາບານ ແລະ ການມອບໝາຍວຽກງານຈາກພະຍາບານຜູ້ມີປະສົບການ | -ຂໍຄໍາປຶກສາກັບພະຍາບານຜູ້ມີປະສົບການ ໃນການກໍານົດເປົ້າໝາຍທີ່ເໝາະສົມໃນການເຮັດວຽກຮູ້ຄົ້ນຫາວິທີເຮັດວຽກໃຫ້ບັນລຸຜົນສໍາເລັດ.<br>-ມີການປຶກສາຫາລືແລກປ່ຽນຄວາມຮູ້ເພື່ອສະໜັບສະໜູນການເຮັດວຽກໃຫ້ບັນລຸຜົນສໍາເລັດ. | -ພັດທະນາຕົນເອງໃຫ້ມີຄວາມຮູ້ ທັກສະ ນໍາໃຊ້ພາສາຕ່າງປະເທດ, ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານເພື່ອການພັດທະນາຂີດຄວາມສາມາດໃນການນໍາພາ ວຽກງານການບໍລິຫານ.<br>- ໃຫ້ໂອກາດການຍົກລະດັບ, ແລກປ່ຽນຖອດຖອນບົດຮຽນ ແລະ ພັດທະນາຄວາມຮູ້, ຄວາມສາມາດດ້ານວິຊາຊີບ.<br>-ຕິດຕາມຄຸນນະພາບຜົນ ຮັບຄວາມສໍາເລັດ | -ມີຄວາມຊໍານານໃນການນໍາພາ, ສົ່ງເສີມເພື່ອນຮ່ວມງານ ໃນການປະກອບສ່ວນການປະຕິບັດວຽກງານໃຫ້ບັນລຸເປົ້າໝາຍຂອງຕົນເອງ ໜ່ວຍງານ ແລະອົງກອນ<br>-ການໄດ້ຮັບຄ່າຕອບແທນ, ລາງວັນ ແລະ ຍ້ອງຍໍສັນລະເສີນ ທີ່ເໝາະສົມ.<br>-ໃຫ້ໂອກາດຍົກລະດັບ, ແລກປ່ຽນຖອດຖອນບົດຮຽນ ແລະ ພັດທະນາຄວາມຮູ້ ຄວາມສາມາດວິຊາຊີບ. |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | | ຂອງວຽກງານຕາມທີ່ກຳນົດໄວ້. | -ສ້າງຄຸນຄ່າວິຊາຊີບພະຍາບານໃຫ້ສູງຂຶ້ນຢ່າງຕໍ່ເນື່ອງ. |
| | 3.4 ການຕິດຕາມຊຸກຍູ້ທາງການພະຍາບານ | - ຕິດຕາມ ຊຸກຍູ້ ແລະປະເມີນຄຸນນະພາບໃນການປະຕິບັດວຽກງານ. | -ເຂົ້າໃຈລະບົບການຕິດຕາມຊຸກຍູ້ຂອງໜ່ວຍງານ ພາຍໃຕ້ຄຳແນະນຳຂອງພະຍາບານຜູ້ມີປະສົບການ | -ຂໍຄຳປຶກສາພະຍາບານຜູ້ມີປະສົບການ ໃນການຕິດຕາມຊຸກຍູ້ ແລະ ໃຫ້ສະໜັບສະໜູນ ເພື່ອນຮ່ວມງານເພື່ອໃຫ້ມີຜົນງານທີ່ມີຄຸນນະພາບສູງ. | -ສາມາດ ວິເຄາະບັນຫາ ແລະ ຄວາມຕ້ອງການໃນການຕິດຕາມ ຊຸກຍູ້ວຽກງານ, ນຳພາ, ສອນວຽກ ແລະໃຫ້ຄຳແນະນຳກ່ຽວກັບວິທີປະຕິບັດວຽກງານໃນທີມງານໃຫ້ບັນລຸເປົ້າ ໝາຍ. | -ມີຄວາມຊຳນານໃນການຕິດຕາມ ຊຸກຍູ້, ສ້າງໂອກາດ ແລະເອື້ອອຳນວຍ ໃນການສົ່ງເສີມໃຫ້ທີມງານໄດ້ສະແດງອອກໃນການຄິດ ການສົນທະນາ, ປຶກສາຫາລື ເພື່ອປັບປຸງການປະຕິບັດວຽກງານດ້ວຍຕົນເອງ.<br>-ສາມາດຕິດຕາມຊຸກຍູ້ວຽກງານນຳພາ, ສອນວຽກ ແລະໃຫ້ຄຳແນະນຳກ່ຽວກັບວິທີປະຕິບັດວຽກງານ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | | | ໃນທີມງານໃຫ້ບັນລຸເປົ້າໝາຍ.<br>-ໃຫ້ການຊ່ວຍເຫຼືອຜູ້ທີ່ຢູ່ໃນຄວາມຮັບຜິດຊອບ. |
| | 3.5 ການເຮັດວຽກເປັນທີມ ແລະ ການປະຕິບັດວຽກງານຮ່ວມກັບສາຂາວິຊາຊີບອື່ນໆໃນ | - ປະຕິບັດວຽກງານຕາມການມອບ ໝາຍ ໂດຍອີງຕາມມາດຕະຖານການພະຍາບານ;<br>- ນຳພາ, ສະໜັບສະໜູນ ແລະຊ່ວຍເຫຼືອທີມງານໃນການປະຕິບັດວຽກງານ ເພື່ອໃຫ້ວຽກບັນລຸເປົ້າໝາຍ ;<br>- ປະສານງານ ຮ່ວມມືໃນການວາງແຜນ, ປະຕິບັດ, ປະເມີນຜົນ ແລະຮັບຮູ້ ຜົນການ | - ປະຕິບັດຕາມການມອບໝາຍ ໂດຍອີງຕາມມາດຕະຖານການພະຍາບານ ພາຍໃຕ້ການຊີ້ນຳຂອງພະຍາບານທີ່ມີປະສົບການ;<br>- ມີສ່ວນຮ່ວມໃນການສະໜັບສະໜູນ ແລະຊ່ວຍເຫຼືອທີມງານ ໃນການປະຕິບັດວຽກງານເພື່ອໃຫ້ບັນລຸເປົ້າໝາຍ; | -ຂໍຄຳປຶກສານຳພະຍາບານຜູ້ມີປະສົບການໃນການປະຕິບັດວຽກງານ ໃຫ້ໄປຕາມມາດຕະຖານການພະຍາບານ;<br>- ມີສ່ວນຮ່ວມໃນການສະໜັບສະໜູນ ແລະຊ່ວຍເຫຼືອທີມງານ ໃນການປະຕິບັດວຽກງານເພື່ອໃຫ້ວຽກປະສົບຜົນສຳເລັດ;<br>- ສືບຕໍ່ເຂົ້າຮ່ວມຮຽນຮູ້ການວາງແຜນ, | -ສາມາດຕັດສິນໃຈໃນສ້າງທີມໃນການປະຕິບັດວຽກງານ, ການວິເຄາະບັນຫາ ແລະ ຄວາມຕ້ອງການໃນການປະຕິບັດງານກັບສະມາຊິກໃນທີມງານ ແລະ ການເຮັດວຽກຮ່ວມກັບບຸກຄະລາກອນການແພດເພື່ອເພີ່ມປະສິດທິພາບການພະຍາບານໃນສະຖານທີ່ບໍລິການ | -ມີຄວາມຊຳນານ ໃນການສ້າງທີມໃນການປະຕິບັດງານ, ການວະເຄາະບັນຫາ ແລະຄວາມຕ້ອງການໃນການປະຕິບັດງານກັບສະມາຊິກໃນທີມງານ ແລະ ການເຮັດວຽກຮ່ວມກັບບຸກຄະລາກອນການແພດ ເພື່ອເພີ່ມປະສິດທິພາບການພະຍາບານໃນສະຖານທີ່ບໍລິການ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ປະຕິບັດວຽກງານຮ່ວມກັນສາຂາວິຊາຊີບອື່ນໆ. | - ເຂົ້າຮ່ວມຮຽນຮູ້ການວາງແຜນ, ປະຕິບັດ, ປະເມີນຜົນ ແລະຮັບຮູ້ ຜົນການປະຕິບັດງານຮ່ວມກັນສາຂາວິຊາຊີບອື່ນໆ. | ປະຕິບັດ, ປະເມີນຜົນ ແລະຮັບຮູ້ ຜົນການປະຕິບັດງານຮ່ວມກັນສາຂາວິຊາຊີບອື່ນໆ. | ສາທາລະນະສຸກ.ທຸກຂັ້ນ. | ສາທາລະນະສຸກ.ທຸກຂັ້ນ. |
| | 3.6 ການສ້າງສະພາບແວດລ້ອມທີ່ປອດໄພ | - ຈັດລະບຽບສະຖານທີ່ເຮັດວຽກ ແລະ ປະກອບອຸປະກອນໃຫ້ພຽງພໍໃນການປະຕິບັດການດູແລສຸຂະພາບ;<br>- ສ້າງລະບົບ ແລະກົນໄກ ທີ່ອຳນວຍຄວາມສະດວກໃນການປະຕິບັດວຽກງານ;<br>- ສະໜັບສະໜູນ, ປະສານງານ, ໃຫ້ຄວາມຮ່ວມມືກັບບຸກຄະລາກອນການແພດ;<br>- ບັນທຶກ ແລະລາຍງານສະພາບການທີ່ອາດຈະ | -ເຂົ້າໃຈຫລັກການສະຖານທີ່ເຮັດວຽກ ແລະ ປະກອບອຸປະກອນໃຫ້ພຽງພໍໃນການປະຕິບັດການດູແລສຸຂະພາບ;<br>-ເຂົ້າໃຈຫລັກການ ຄຸ້ມຄອງຄວາມສ່ຽງ ແລະການປະຕິບັດວຽກງານທີ່ມີປະສິດທິພາບ<br>-ຮັກສາສະພາບແວດລ້ອມທີ່ປອດໄພໃນສະຖານທີ່ບໍລິການສຸຂະພາບໃຫ້ມີຄວາມປອດໄພ ພາຍໃຕ້ການ | -ຂໍຄຳປຶກສາ ແລະ ຄຳແນະນຳຈາກພະຍາບານຜູ້ມີປະສົບການ ໃນການຈຳແນກບັນຫາ, ວິເຄາະປັດໃຈທີ່ມີຜົນກະທົບຕໍ່ສະພາບແວດລ້ອມໃນສະຖານທີ່ເຮັດວຽກ;<br>-ບັນທຶກ ແລະ ລາຍງານສະພາບການທີ່ອາດຈະສົ່ງຜົນກະທົບຕໍ່ຄວາມປອດໄພຂອງຄົນເຈັບ / ຄອບຄົວ ແລະ ບຸກຄະລາກອນ | -ສາມາດຕັດສິນໃຈໃນການວາງແຜນ, ແກ້ໄຂ ແລະ ປັບປຸງສະພາບແວດລ້ອມໃນການເຮັດວຽກຢ່າງທັນການ ໂດຍອີງໃສ່ຫຼັກການຄຸ້ມຄອງຄວາມສ່ຽງ ຢ່າງທັນການ ເພື່ອຮັກສາສະພາບແວດລ້ອມທີ່ປອດໄພໃນບ່ອນເຮັດວຽກງານ. | -ມີຄວາມຊຳນານ ໃນການວິເຄາະບັນຫາ, ປັດໃຈທີ່ມີຜົນກະທົບ, ວາງແຜນແກ້ໄຂ ໂດຍນຳ ໃຊ້ຫຼັກການຂອງການຄຸ້ມຄອງຄວາມສ່ຽງ ເພື່ອສ້າງສະພາບແວດລ້ອມທີ່ຄວາມປອດໄພໃນສະຖານທີ່ເຮັດວຽກຢ່າງທັນການ;<br>- ໃຫ້ການສະໜັບສະໜູນ, ປະສານງານ, ໃຫ້ຄວາມຮ່ວມມື |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ສົ່ງຜົນກະທົບຕໍ່ຄວາມປອດໄພຂອງຄົນເຈັບ / ຄອບຄົວ ແລະ ທັບທີມງານວິຊາຊີບປິ່ນປົວໃຫ້ແກ່ຜູ້ຮັບຜິດຊອບ. | ຊີ້ນຳຂອງພະຍາບານທີ່ມີປະສົບການ. | ການແພດໃຫ້ແກ່ຜູ້ຮັບຜິດຊອບ. | | ທັບທີມງານວິຊາຊີບປິ່ນປົວ;<br><br>- ບັນທຶກ ແລະລາຍງານສະພາບການທີ່ມີຜົນກະທົບຕໍ່ຄວາມປອດໄພຂອງຄົນເຈັບ / ຄອບຄົວ ແລະບຸກຄະລາກອນການແພດໃຫ້ຖືກຕ້ອງ ຄົບຖ້ວນ. |
| | 3.7 ການຕິດຕໍ່ສື່ສານ | ສະແດງໃຫ້ເຫັນການຕິດຕໍ່ສື່ສານ, ແນວທາງການ ບໍລິການພະຍາບານໃຫ້ແກ່ ກັບຄົນເຈັບ, ຄອບຄົວ ແລະ ສະມາຊິກ | -ໃຊ້ຄວາມຮູ້, ທັກສະການຕິດຕໍ່ສື່ສານໃນການບໍລິການດູແລສຸຂະພາບພາຍໃຕ້ຄໍາແນະນໍາຂອງພະຍາບານຜູ້ມີປະສົບການ. | -ໃຫ້ການຕິດຕໍ່ສື່ສານທີ່ຈະແຈ້ງ ແລະເໝາະສົມ ເພື່ອຮັບປະກັນໃຫ້ຄົນເຈັບ ແລະຄອບຄົວເຂົ້າໃຈບັນຫາສຸຂະພາບ; | -ວິເຄາະບັນຫາຄວາມຕ້ອງການ, ການໄດ້ຮັບຂໍ້ມູນຂ່າວສານໃນດ້ານບໍລິການສຸຂະພາບ; | -ມີຄວາມຊໍານານໃນການວິເຄາະບັນຫາ ແລະ ຄວາມຕ້ອງການດ້ານການສື່ສານໃນການດູແລສຸຂະພາບ; |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ໃນທີມງານຢ່າງມີປະສິດທິພາບ. | | -ນຳໃຊ້ວິທີການສື່ສານທີ່ ຖືກຕ້ອງ ແລະ ເໝາະສົມ ດ້ວຍການປາກເວົ້າ ຫຼືການຂຽນ ແລະ ອຸປະກອນການສື່ສານທາງແບບດິຈິຕອນ. | -ຕິດຕໍ່ສື່ສານຢ່າງຈະແຈ້ງ ເໝາະສົມເພື່ອຮັບປະກັນໃຫ້ຄົນເຈັບ ແລະຄອບຄົວເຂົ້າໃຈບັນຫາສຸ ຂະພາບ.<br>-ໃຊ້ເທັກນິກການສື່ສານ ເຊັ່ນ: ການເວົ້າ ຫຼື ໃນຮູບແບບການຂຽນ ແລະ ໂຄສະນາແບບດິຈິຕອລ ໃຫ້ຖືກຕ້ອງ ແລະ ເໝາະສົມກັບສະພາບບັນຫາຂອງຄົນເຈັບ ແລະ ຄອບຄົວ. | -ສະແດງໃຫ້ເຫັນການຕິດຕໍ່ສື່ສານ ວິທີການບໍລິການພະຍາບານໃຫ້ແກ່ ຄົນເຈັບ, ຄອບຄົວ ແລະ ສະມາຊິກໃນທີມງານຢ່າງມີປະສິດທິພາບ;<br>- ສ້າງສື່ການສື່ສານ, ການໂຄສະນາ ແບບແບບດິຈິຕອລ ໃຫ້ຖືກຕ້ອງ ແລະ ເໝາະສົມກັບສະພາບບັນຫາຂອງຄົນເຈັບ ແລະ ຄອບຄົວ. |
| | | | | ໃຫ້ການຕິດຕໍ່ສື່ສານກັບສະມາຊິກໃນທີມງານຢ່າງຈະແຈ້ງ, ຖືກກົດໝາຍ, ມີຈັນຍາບັນ | ໃຫ້ການຕິດຕໍ່ສື່ສານກັບສະມາຊິກໃນທີມງານຢ່າງຈະແຈ້ງ, ຖືກກົດ ໝາຍ, ມີຈັນຍາ | ສ້າງກົນໄກທີ່ໃຫ້ມີປະສິດທິພາບໃນການຕິດຕໍ່ສື່ສານ ແລະ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | , ມີເຫດຜົນ, ຊັດເຈນ ແລະທັນສະພາບ. | ບັນ, ມີເຫດຜົນ, ຊັດເຈນ ແລະ ທັນສະພາບ. | ແບ່ງປັນຂໍ້ມູນໃນທີມງານທັນສະພາບ. |
| **4. ການຄົ້ນຄວ້າທາງການພະຍາບານ** (Education and Nursing Research) | 4.1 ການຄິດວິເຄາະ (Analytical thinking) | -ວິເຄາະບັນຫາ ແລະ ປັດໃຈ ທີ່ມີຜົນຕໍ່ການປະຕິບັດວຽກງານພະຍາບານເຊັ່ນ: ການປ່ຽນແປງທາງດ້ານວັດທະນະທຳ-ສັງຄົມ, ເສດຖະກິດ, ລະບົບການບໍລິການສຸຂະພາບ ແລະ ຄວາມກ້າວໜ້າທາງເຕັກໂນໂລຊີ ການແພດ;<br>-ຄາດຄະເນບັນຫາວຽກງານທີ່ອາດຈະເກີດຂຶ້ນທີ່ພົວພັນກັບພາກສ່ວນທີ່ກ່ຽວຂ້ອງ;<br>-ນຳໃຊ້ຜົນການຄິດວິເຄາະບັນຫາສຸຂະພາບເພື່ອນຳໄປສູ່ຂະບວນ | - ຮຽນຮູ້ຫຼັກການຄິດວິເຄາະບັນຫາທາງການພະຍາບານ ແລະ ປັດໃຈ ທີ່ກ່ຽວຂ້ອງ ເພື່ອ ກຳນົດແນວທາງໃນການແກ້ໄຂບັນຫາ ແລະ ການພັດທະນາຄຸນນະພາບວຽກງານຂອງຕົນເອງ, ໜ່ວຍງານ ແລະອົງກອນ ພາຍໃຕ້ຄຳແນະນຳຂອງພະຍາບານຜູ້ມີປະສົບການ. | - ເຂົ້າໃຈຫຼັກການວິເຄາະ, ບັນຫາ ທາງການພະຍາບານ ແລະ ປັດໃຈ ທີ່ກ່ຽວຂ້ອງດ້ວຍຕົນເອງ ແລະ ປຶກສາແນວທາງໃນການແກ້ໄຂບັນຫາ ແລະ ການພັດທະຄຸນນະພາບວຽກງານຂອງຕົນເອງ, ໜ່ວຍງານ ແລະ ອົງກອນ ດ້ວຍຕົນເອງ. | -ວິເຄາະ ແລະ ຈຳແນກບັນຫາສຸຂະພາບ ແລະ ປັດໃຈ ທີ່ກ່ຽວຂ້ອງ, ລຳດັບຄວາມສຳຄັນຂອງບັນຫາ, ໃຊ້ແນວຄິດ, ຫລັກການ ແລະທິດສະດີ ເພື່ອກຳນົດວິທີການທີ່ເປັນວິທະຍາສາດ ໃນການແກ້ໄຂ ແລະ ການພັດທະນາ ວຽກງານທີ່ສອດຄ່ອງກັບຄວາມຕ້ອງການ ການດູແລສຸຂະພາບ, ການສຶກສາ, ການບໍລິຫານ ແລະ ການພັດທະນາ | -ມີຄວາມຊຳນານໃນການຄິດວິເຄາະ, ຈຳແນກບັນຫາສຸຂະພາບ ແລະ ປັດໃຈທີ່ກຳນົດຄວາມສຳພັນກັບວຽກງານ ແລະ ບັນຫາທີ່ຊັບຊ້ອນຂອງສ່ວນຕ່າງໆຂອງບັນຫາຄຸນນະພາບການພະຍາບານ(ວິເຄາະການປ່ຽນແປງທາງເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ລະບົບສຸຂະພາບ ແລະ ຄວາມກ້າວໜ້າທາງເທັກໂນໂລຍີດ້ານ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | ການຕັດສິນໃຈແກ້ໄຂບັນຫາ. | | | ວິຊາຊີບທາງການພະຍາບານ. | ການແພດ ແລະ ການພະຍາບານ) ທີ່ກ່ຽວຂ້ອງ, ລຳດັບຄວາມສຳຄັນຂອງບັນຫາ, ມີຫົວຄິດປະດິດສ້າງ<br>-ໃຊ້ແນວຄິດ, ຫລັກການ ແລະທິດສະດີ ເພື່ອກຳນົດວິທີການທີ່ເປັນວິທະຍາສາດ ໃນການແກ້ໄຂ ແລະ ການພັດທະນາທີ່ສອດຄ່ອງກັບຄວາມຕ້ອງການການດູແລສຸຂະພາບ, ການສຶກສາ, ການບໍລິຫານ ແລະ ການພັດທະນາວິຊາຊີບທາງການພະຍາບານ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | 4.2 ການຄົ້ນຄວ້າ, ການໃຊ້ຫຼັກຖານທາງວິທະຍາສາດ ແລະ ສ້າງນະວັດຕະກໍາ | - ເຮັດການຄົ້ນຄວ້າ ຫຼື ເຂົ້າຮ່ວມການຄົ້ນຄວ້າ ທາງການພະຍາບານ ແລະ ນະວັດຕະກໍາ | ຊ່ວຍວຽກງານການຄົ້ນຄ້ວາວິທະຍາສາດທາງການພະຍາບານພາຍໃຕ້ການຊີ້ນໍານໍາພາ ຂອງພະຍາບານຜູ້ມີປະສົບການ. | ເຂົ້າຮ່ວມການເຮັດຄົ້ນຄວ້າວິທະຍາສາດ ແລະການສ້າງນະວັດຕະກໍາ ທາງການພະຍາບານ. | ເຮັດການຄົ້ນຄວ້າວິທະຍາສາດ ກ່ຽວກັບການດູແລສຸຂະພາບ, ການສຶກສາ, ການບໍລິຫານ ແລະ ການພັດທະນາຄຸນນະພາບວິຊາຊີບການພະຍາບານ. | ນໍາພາ ແລະສອນວຽກງານການຄົ້ນຄວ້າວິທະຍາສາດ ກ່ຽວກັບການດູແລສຸຂະພາບ, ການສຶກສາ, ການບໍລິຫານ ແລະ ການພັດທະນາຄຸນນະພາບວິຊາຊີບການພະຍາບານ. |
| | | -ນໍາໃຊ້ຜົນການຄົ້ນຄວ້າ ແລະ ນະວັດຕະກໍາຕາມຫຼັກຖານວິທະຍາສາດເພື່ອປັບປຸງ ແລະ ພັດທະນາວິຊາຊີບການພະຍາບານ. | ເຂົ້າໃຈການປະຕິບັດການໃຊ້ຫລັກຖານວິທະຍາສາດໃນການປັບປຸງ ແລະ ພັດທະນາວິຊາຊີບການພະຍາບານ ພາຍໃຕ້ຄໍາແນະນໍາຂອງພະຍາບານທີ່ມີປະສົບການ. | ປຶກສາ ຫາລື ກັບພະຍາບານຜູ້ມີປະສົບການ ໃນການນໍາໃຊ້ຄວາມຮູ້ ແລະ ຫຼັກຖານທາງວິທະຍາສາດເຂົ້າໃນການປັບປຸງຄຸນນະພາບການ ດູແລສຸຂະພາບ, ການສຶກສາ, ການບໍລິຫານ ແລະ ການພັດທະນາ | - ວິເຄາະບັນຫາ ແລະ ຄວາມຕ້ອງການໃນການປັບປຸງ, ແກ້ໄຂ ແລະ ພັດທະນາຄຸນນະພາບການພະຍາບານ;<br>-ທົບທວນ ແລະເລືອກໃຊ້ຫລັກຖານທາງວິທະຍາສາດເຂົ້າໃນການປັບປຸງ ຄຸນ | -ເປັນຕົວແບບໃນການນໍາໃຊ້ຫລັກຖານທາງວິທະຍາສາດ ແລະ ນະວັດຕະກໍາທາງການພະຍາບານໃໝ່ໆ ເຂົ້າໃນການປັບປຸງ ຄຸນນະພາບການ ດູແລສຸຂະພາບ, ການສຶກສາ, ການບໍລິຫານ ແລະ ການ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | ຄຸນນະພາບວິຊາຊີບການພະຍາບານທີ່ພົບເຫັນໃນການປັບປຸງມາດຕະຖານການດູແລ. | ນະພາບການ ດູແລສຸຂະພາບ, ການສຶກສາ, ການບໍລິຫານ ແລະ ການພັດທະນາຄຸນນະ ພາບວິຊາຊີບ ແລະ ພັດ ທະນາມາດຕະຖານການພະຍາບານໃຫ້ສູງຂຶ້ນ. | ພັດທະນາຄຸນນະພາບວິຊາຊີບ ແລະ ພັດທະນາມາດຕະຖານການພະຍາບານໃຫ້ສູງຂຶ້ນ. |
| | 4.3 ເຕັກໂນໂລຊີແລະຂໍ້ມູນຂ່າວສານ | - ນຳໃຊ້ຂໍ້ມູນຂ່າວສານເຕັກໂນໂລຊີ ທົບທວນຄວາມຮູ້ ແລະວິເຄາະຂໍ້ມູນ ບັນຫາສຸຂະພາບ ທີ່ມີຄວາມສ່ຽງ ແລະປັບປຸງຄຸນນະພາບການບໍລິການ. | ເຂົ້າໃຈຫລັກການ, ວິທີການສືບຄົ້ນ ຄວາມຮູ້, ວິເຄາະຂໍ້ມູນ ບັນຫາສຸຂະພາບ ທີ່ມີຄວາມສ່ຽງ ແລະປັບປຸງຄຸນນະພາບການບໍລິການພາຍໃຕ້ຄຳແນະນຳຂອງພະຍາບານທີ່ມີປະສົບການ. | ປຶກສາການໃຊ້ເທັກໂນໂລຊີນຳພະຍາບານທີ່ມີປະສົບການໃນການສືບຄົ້ນຫາ ຫຼັກຖານວິທະຍາສາດ, ວິເຄາະຂໍ້ມູນ ບັນຫາສຸຂະພາບທີ່ມີຄວາມສ່ຽງ ແລະປັບປຸງຄຸນນະພາບການບໍລິການ. | ນຳໃຊ້ເທັກໂນໂລຊີໃນການສືບຄົ້ນຂໍ້ມູນ, ວິເຄາະຂໍ້ມູນ ບັນຫາສຸຂະພາບ ທີ່ມີຄວາມສ່ຽງ ແລະປັບປຸງຄຸນນະພາບການບໍລິການ. | ເປັນຕົວແບບນຳໃຊ້ເທັກໂນໂລຊີ ໃນການສືບຄົ້ນຂໍ້ມູນ, ວິເຄາະຂໍ້ມູນ ບັນຫາສຸຂະພາບ ທີ່ມີຄວາມສ່ຽງ ແລະປັບປຸງຄຸນນະພາບການບໍລິການ. |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| **5. ວິຊາຊີບ ແລະ ການພັດທະນາຕົນເອງ** (Professional and Personal Development) | 5.1 ການພັດທະນາຕົນເອງຕໍ່ເນື່ອງ Personal Development | - ການຮຽນຮູ້ຕະຫລອດຊີວິດ | ສະແດງອອກຮຽນຮູ້ເພື່ອການພັດທະນາວິຊາຊີບການພະຍາບານຂອງຕົນເອງຢ່າງຕໍ່ເນື່ອງ ພາຍໃຕ້ຄຳແນະນຳຂອງພະຍາບານຜູ້ມີປະສົບການ | ປຶກສາຫາລືກັບພະຍາບານຜູ້ມີປະສົບການ ເພື່ອການພັດທະນາວິຊາຊີບການພະຍາບານຂອງຕົນເອງຢ່າງຕໍ່ເນື່ອງ. | ອອກແບບການພັດທະນາວິຊາຊີບການພະຍາບານ ຂອງຕົນເອງຢ່າງຕໍ່ເນື່ອງ. | ເປັນຕົວແບບໃນສະແດງອອກການພັດທະນາວິຊາຊີບການພະຍາບານຂອງຕົນເອງຢ່າງຕໍ່ເນື່ອງ |
| | | -ຮັກສາຄວາມຮູ້ຄວາມເປັນຊ່ຽວຊານ ແລະ ສະແດງອອກຄວາມເປັນມືອາຊີບ | -ພັດທະນາຕົນເອງໃຫ້ມີຄວາມຮູ້ ຄວາມຊ່ຽວຊານໃນສາຂາວິຊາຊີບພະຍາບານໃຫ້ທັນກັບຍຸກສະໄໝ | ປຶກສາກັບພະຍາບານຜູ້ມີປະສົບການໃນການຊອກໂອກາດເພື່ອການພັດທະນາວິຊາຊີບການພະຍາບານຂອງຕົນເອງໃຫ້ສູງຂຶ້ນທັງໄລຍະສັ້ນ ແລະ ໄລຍະຍາວ. | ແນະນຳ ແລະ ແລກປ່ຽນ ຄວາມຮູ້ ແລະ ປະສົບການ ໃນການປະຕິບັດການພະຍາບານ ໃນທີມພະຍາບານ ແລະ ທີມສາຂາວິຊາຊີບສຸຂະພາບ. | ເປັນຕົວແບບໃນການພັດທະນາຕົນເອງຢ່າງຕໍ່ເນື່ອງ, ແນະນຳ, ແລກປ່ຽນ ຄວາມຮູ້ ແລະ ປະສົບການດ້ານການພະຍາບານ. |
| | 5.2 ການພັດທະນາຄຸນນະພາບວິຊາຊີບ Professional, and | - ເຂົ້າຮ່ວມຂະບວນການປະກັນຄຸນນະພາບເພື່ອ | ສະແດງອອກໃນການໃຫ້ການບໍລິການພະຍາບານ | ສະແດງອອກໃນການໃຫ້ການບໍລິການພະຍາບານ | ສະແດງອອກໃນການໃຫ້ການບໍລິການພະຍາບານ | ເປັນຕົວແບບໃນການສະແດງອອກໃນ |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | Quality Development) | ໃຫ້ມີຄວາມໝັ້ນໃຈການບໍລິການ ພະຍາບານທີ່ມີຄຸນນະພາບ | ຕາມຂອບ ເຂດ ແລະ ມາດຕະຖານ ການພະຍາບານ ພາຍໃຕ້ຄຳແນະນຳຂອງພະຍາບານຜູ້ມີປະສົບການ | ຕາມຂອບເຂດ ແລະ ມາດຕະຖານ ການພະຍາບານ ແລະເຂົ້າຮ່ວມການປະເມີນຄຸນນະພາບການບໍລິການພະຍາບານ. | ຕາມຂອບ ເຂດ ແລະ ມາດຕະຖານ ແລະ ປະເມີນຄຸນນະພາບການບໍລິການ ພະຍາບານ. | ການໃຫ້ການບໍລິການພະຍາບານ ຕາມຂອບ ເຂດ ແລະ ມາດຕະຖານ ການພະຍາບານ ແລະປະເມີນຄຸນນະພາບການບໍລິການພະຍາບານໃນໜ່ວຍງານ ແລະ ອົງກອນ. |
| | | - ເປັນສະມາຊິກບອດ ພະຍາບານ ແລະ ສະມາຄົມພະຍາບານ ແລະສະໜັບສະໜູນການປະຕິບັດກິດຈະກຳການພະຍາບານ | ເຂົ້າຮ່ວມໃນການຈັດກິດຈະກຳພັດທະນາວິຊາຊີບ ການພະຍາບານ | ປະກອບສ່ວນໃຫ້ການບໍລິການພະຍາບານແກ່ສັງຄົມໃນວັນສຳຄັນຕ່າງໆ, ກອງປະຊຸມ, ເຝິກອົບຮົມ ແລະ ເຂົ້າຮ່ວມສຳມະນາທາງດ້ານວິຊາການ. | ຈັດກິດຈະກຳການພະຍາບານເຊັ່ນ: ກອງປະຊຸມວິຊາການພະຍາບານໃນການສະເຫຼີມສະຫຼອງວັນພະຍາບານສາກົນ ແລະວັນສຳຄັນຕ່າງໆຂອງຊາດ ແລະ ການບໍລິການສຸຂະພາບໃນ | ນຳສະເໜີຜົນງານທາງດ້ານວິຊາການພະຍາບານໃນງານວັນສຳຄັນຕ່າງໆຂອງຊາດເຊັ່ນ: ວັນພະຍາບານສາກົນ, ວັນສົ່ງເສີມສຸຂະພາບ, ກອງປະຊຸມພະຍາບານອາຊຽນ ແລະ ສາກົນ) |

| ຂີດຄວາມສາມາດຫລັກ (Core Competency Domains) | ມາດຕະຖານຂີດຄວາມສາມາດ (Competency Standard) | ຕົວຊີ້ວັດຂີດຄວາມສາມາດ (Competency Indicators) | ລະດັບຂີດຄວາມສາມາດພະຍາບານວິຊາຊີບ | | | |
|---|---|---|---|---|---|---|
| | | | ລະດັບ 1 | ລະດັບ 2 | ລະດັບ 3 | ລະດັບ 4 |
| | | | | | ກໍລະນີມີເຫດການສຸກເສີນ ແລະ ໄພພິບັດ. | -ການບໍລິການສຸຂະພາບໃນກໍລະນີມີເຫດການສຸກເສີນ ແລະ ໄພພິບັດ. |
| | 5.3 ການສົ່ງເສີມຄຸນຄ່າວິຊາຊີບ (Promoting professional values) | - ການຮັກສາພາບພົດການພະຍາບານ | ສະແດງອອກ ຄຸນລັກສະນະພະຍາບານໃນຊຸດເຄື່ອງແບບ;<br>- ມີກິລິຍາທ່າທີ ທີ່ມີຄວາມພ້ອມ ໃຫ້ການບໍລິການພະຍາບານດ້ວຍໃຈ ພາຍໃຕ້ຄຳແນະນຳຂອງພະຍາບານຜູ້ມີປະສົບການ. | ສະແດງອອກ ຄຸນລັກສະນະພະຍາບານໃນຊຸດເຄື່ອງແບບ;<br>- ມີກິລິຍາທ່າທີ ທີ່ມີຄວາມພ້ອມ ໃຫ້ການບໍລິການພະຍາບານດ້ວຍໃຈ ແລະຄ່ອງແຄ້ວ. | ສະແດງອອກ ຄຸນລັກສະນະພະຍາບານໃນຊຸດເຄື່ອງແບບ;<br>- ມີກິລິຍາທ່າທີ ທີ່ມີຄວາມພ້ອມ ໃຫ້ການບໍລິການພະຍາບານດ້ວຍໃຈ, ຄ່ອງແຄ້ວແລະມີຄວາມໝັ້ນໃຈໃນວິຊາຊີບ. | ເປັນຕົວແບບ ແລະສົ່ງເສີມໃຫ້ພະຍາບານສະແດງອອກຄຸນລັກສະນະພະຍາບານໃນຊຸດເຄື່ອງແບບ;<br>- ມີກິລິຍາທ່າທີ ທີ່ມີຄວາມພ້ອມ ໃຫ້ການບໍລິການພະຍາບານແບບມືອາຊີບ. |

## ເອກະສານອ້າງອີງ


1. ກະຊວງສາທາລະນະສຸກ. ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງສາທາລະນະສຸກວ່າດ້ວຍກົດລະບຽບການພະຍາບານ ແລະ ການຜະດຸງຄັນ (2008)
2. ກະຊວງສາທາລະນະສຸກ. ຍຸດທະສາດການພັດທະນາພະນັກງານສາທາລະນະສຸກ (2010)
3. ຄະນະພະຍາບານສາດ, ມະຫາວິທຍາໄລວິທະຍາສາດສຸຂະພາບ. ຫລັກສູດປະລິນຍາຕີພະຍາບານສາດ (2010)
4. ກົມການສຶກສາຄົ້ນຄວ້າວິທະຍາສາດ ແລະ ກົມປິ່ນປົວ. ຂີດຄວາມສາມາດວິຊາຊີບ ການພະຍາບານແຫ່ງຊາດ (2013)
5. ກົມການສຶກສາຄົ້ນຄວ້າວິທະຍາສາດ. ຫລັກສູດພະຍາບານຊັ້ນສູງ (2014)
6. ກະຊວງສາທາລະນະສຸກ. ກົດໝາຍວ່າດ້ວຍການປິ່ນປົວ (2015)
7. ກົມການສຶກສາຄົ້ນຄວ້າວິທະຍາສາດ ແລະ ກົມປິ່ນປົວ. ຄູ່ມືແນະນຳດ້ານຂອບເຂດການປະຕິບັດການພະຍາບານ (ສະບັບປັບປຸງ) (2015)
8. ກະຊວງສາທາລະນະສຸກ. ຍຸດທະສາວ່າດ້ວຍການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງ ສປປ ລາວ. 2016-2025 (2016)
9. ກະຊວງສາທາລະນະສຸກ. ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງບຸກຄະລາກອນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ (2018)
10. ສະພາຄຸ້ມຄອງວິຊາຊີບປິ່ນປົວ. ຂໍ້ຕົກລົງວ່າດ້ວຍການປັບປຸງການແຕ່ງຕັ້ງບຸກຄະລາກອນຂອງຄະນະກຳມະການວິຊາຊີບປິ່ນປົວ (ບອດ) ການພະຍາບານ ແລະ ຜະດຸງຄັນ (Nursing and Midwifery Board). (2019)
11. Aungsuroch Y. and Gunawan J. Nurse Preparation towards ASEAN Economic Community 2015. International Journal of Health Sciences & Research. 2015;5(3): 365-372. https://www.ijhsr.org/IJHSR_Vol.5_Issue.3_March2015/51.pdf
12. ASEAN MUTUAL RECOGNITION ARRANGEMENT (MRAs) ON NURSING SERVICES, (2006) https://agreement.asean.org/media/download/20150119183446.pdf
13. AJCCN Achievements (2007-2015) https://asean.org/wp-content/uploads/2012/05/Summary-of-AJCCN-Achievement-2007-2015-Regional-and-National.pdf
14. International Council of Nurses. Nursing Care Continuum Framework and Competencies. (2008). https://siga-fsia.ch/files/user_upload/07_ICN_Nursing_Care_Continuum_Framework_and_Competencies.pdf

**ລາຍຊື່ຄະນະຊີ້ນຳລວມ, ຄະນະຮັບຜິດຊອບດ້ານວິຊາການ**

**ແລະ ຜູ້ທີ່ມີສ່ວນຮ່ວມໃນການທົບທວນ ແລະ ປັບປຸງຂີດຄວາມສາມາດຂອງພະຍາບານລາວ**

**ຄະນະຊີ້ນຳລວມ**

1. ທ່ານ ສຈ. ດຣ ປອນເມກ ດາລາລອຍ — ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ
2. ທ່ານ ຮສ. ດຣ ຈັນເພັງ ທຳມະວົງ — ຮອງປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ
3. ທ່ານ ປອ. ທອງສະຫວັນ ກົງສູນດາລາ — ຫົວໜ້າຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ
4. ທ່ານ ນ ແພງດີ ອິນທະພານິດ — ຫົວໜ້າບອດພະຍາບານ ແລະ ຜະດຸງຄັນ

**ຄະນະຮັບຜິດຊອບດ້ານວິຊາການ**

1. ທ່ານ ນ ແພງດີ ອິນທະພານິດ — ຫົວໜ້າບອດພະຍາບານ ແລະ ຜະດຸງຄັນ
2. ທ່ານ ສຸກສະຫວັນ ພັນປະເສີດ — ຮອງຫົວໜ້າບອດພະຍາບານ ແລະ ຜະດຸງຄັນ, ຄະນະບໍດີ ຄະນະພະຍາບານສາດ, ມວສ
3. ທ່ານ ນ ມີມາລາ ປະທຸມຊາດ — ຮອງຫົວໜ້າບອດພະຍາບານ ແລະ ຜະດຸງຄັນ
4. ທ່ານ ນ ແສງມະນີ ຄຳບຸນເຮືອງ — ຮອງຫົວໜ້າບອດພະຍາບານ ແລະ ຜະດຸງຄັນ, ຮອງຫົວໜ້າກົມການສຶກສາ ສາທາລະນະສຸກ
5. ທ່ານ ປອ ດຣ ນ ອານຸສອນ ສີສຸລາດ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຮອງຄະນະບໍດີ ຄະນະພະຍາບານສາດ, ມະຫາວິທະຍາໄລວິທະຍາສາດສຸຂະພາບ
6. ທ່ານ ວອນ ແກ້ວມະນີ — ຮອງຄະນະບໍດີ ຄະນະພະຍາບານ, ມວສ
7. ທ່ານ ນ ບົວວັນ ປະທຸມທອງ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຫົວໜ້າພະຍາບານ ໂຮງໝໍມະໂຫສົດ
8. ທ່ານ ນ ເລີດມະນີ ສີສຸພັນທະວົງ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຫົວໜ້າພະແນກພະຍາບານ ໂຮງໝໍມິດຕະພາບ
9. ທ່ານ ນ ທິບລານີ ຈູມມະນີວົງ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຫົວໜ້າພະຍາບານ ໂຮງໝໍແມ່ ແລະ ເດັກເກີດໃໝ່
10. ທ່ານ ນ ຄຳຫຼ້າ ສີອຸດົມ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຫົວໜ້າພະຍາບານ ໂຮງໝໍເສດຖາທິລາດ
11. ທ່ານ ນ ບຸນມາລາ ສໍປະເສີດ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຫົວໜ້າພະຍາບານ ໂຮງໝໍເດັກ
12. ທ່ານ ນ ຄຳໂພໄຊ ພົມມະທັນສີ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຫົວໜ້າພາກວິຊາການຜະດຸງຄັນ ຄະນະພະຍາບານ ມວສ
13. ທ່ານ ນ ວຽງສະຫວັນ ສອນສິນໄຊ — ກຳມະການບອດພະຍາບານ ແລະ ຜະດຸງຄັນ, ຫົວໜ້າພະແນກພະຍາບານ, ກປຟ
14. ທ່ານ ນ ອໍລະພິມ ພຸດທະວົງ — ຮອງພະແນກພະຍາບານ ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ
15. ທ່ານ ອຳມະລິນ ພົງສະຫວັດ — ຮອງຫົວໜ້າພະແນກຄຸ້ມຄອງຄຸນນະພາບການສຶກສາ, ກສສ
16. ທ່ານ ດຣ ນ ລຳເງິນ ສີລາວົງ — ວິຊາການພະແນກພະຍາບານ ໂຮງໝໍມະໂຫສົດ
17. ທ່ານ ນ ແນວພະຈັນ ສີຫາວົງ — ກອງເລຂາ ບອດພະຍາບານ ແລະຜະດຸງຄັນ, ກປຟ
18. ທ່ານ ນ ມະນີວອນ ສີລິວັນ — ກອງເລຂາ ບອດພະຍາບານ ແລະຜະດຸງຄັນ, ວິຊາການ ກສສ

**ລາຍຊື່ຜູ້ທີ່ສ່ວນຮ່ວມ**

| | |
|---|---|
| 1. ທ່ານ ປະເສີດ ບຸບຜາ | ຮອງຜູ້ອຳນວຍການ ວສ ຫຼວງພະບາງ |
| 2. ທ່ານ ນະຄອນຄຳ ແສງຈັນ | ຮອງຜູ້ອຳນວຍການ ວສ ສະຫວັນນະເຂດ |
| 3. ທ່ານ ນ ຕິມິດ ສຸວັນນະ | ຮອງຜູ້ອຳນວຍການ ວສ ຈຳປາສັກ |
| 4. ທ່ານ ນ ວຽງມອນ ອິນທະປັດຖາ | ຮອງຜູ້ອຳນວຍການ ໂຮງໝໍແຂວງ ຊຽງຂວາງ |
| 5. ທ່ານ ນ ຈັນມາລີ ອິນພູວຽງ | ຜູ້ອຳນວຍການ ໂຮງຮຽນສາທາລະນະສຸກ ອຸດົມໄຊ |
| 6. ທ່ານ ນ ວິລະດາ ກຸນລະວຸດ | ຫົວໜ້າວິຊາການ ວສ ຫຼວງພະບາງ |
| 7. ທ່ານ ນ ທອງພັບ ບຸນວິໄລ | ຫົວໜ້າວິຊາການ ໂຮງຮຽນພະຍາບານເຕັກນິກແຂວງວຽງຈັນ |
| 8. ທ່ານ ນ ສຸກສະຫວັນ ໂອລີຍະວົງ | ຫົວໜ້າວິຊາການ ໂຮງຮຽນສາທາລະນະສຸກ ຄຳມ່ວນ |
| 9. ທ່ານ ນ ພອນພູລັກ ບົວລະວົງ | ຫົວໜ້າວິຊາການ ວສ ຈຳປາສັກ |
| 10. ທ່ານ ນ ອາດສະໜາ ພົມມະສານ | ຫົວໜ້າໜ່ວຍງານພະຍາບານ ວສ ສະຫວັນນະເຂດ |
| 11. ທ່ານ ນ ບົວທອນ ສຸດທິລາດ | ຮອງໜ່ວຍງານວິຊາການ ໂຮງຮຽນພະຍາບານເຕັກນິກແຂວງວຽງຈັນ |
| 12. ທ່ານ ຄຳສຸກ ສຸດທິດາວົງ | ຮອງຫົວໜ້າໜ່ວຍງານວິຊາການ ໂຮງຮຽນສາທາລະນະສຸກ ອຸດົມໄຊ |
| 13. ທ່ານ ບຸນເຫຼືອ ສາຍມີກຍາ | ຫົວໜ້າໜ່ວຍງານວິຊາການ ສູນອົບຮົມ ຮສຂ ແຂວງສາລະວັນ |
| 14. ທ່ານ ນ ສີສະຫວັດ ແສງທະສຸລິຈັນ | ຫົວໜ້າໜ່ວຍງານວິຊາການ ສູນອົບຮົມ ແລະ ກໍ່ສ້າງວິຊາຊີບ ສາທາລະນະສຸກ ອັດຕະປື |
| 15. ທ່ານ ທອງຈັນ ໄຊຍະຜົນ | ຫົວໜ້າພະຍາບານ ໂຮງໝໍແຂວງຫຼວງພະບາງ |
| 16. ທ່ານ ນ ສີນາລີ ວົງສັກ | ຫົວໜ້າພະຍາບານ ໂຮງໝໍແຂວງ ອຸດົມໄຊ |
| 17. ທ່ານ ນ ສູນຄຳ ສໍປະເສີດ | ຫົວໜ້າພະຍາບານ ໂຮງໝໍແຂວງຄຳມ່ວນ |
| 18. ທ່ານ ນ ເພັດມະນີ ສຸວັນນະມາລີ | ຫົວໜ້າພະຍາບານ ໂຮງໝໍແຂວງສະຫວັນນະເຂດ |
| 19. ທ່ານ ນ ຄຳມີ ສຸວັນຄຳ | ຫົວໜ້າພະຍາບານ ໂຮງໝໍແຂວງ ຈຳປາສັກ |
| 20. ທ່ານ ແສງສຸດາ ບົວລີວັນ | ຄະນະພະຍາບານ ໂຮງໝໍແຂວງວຽງຈັນ |
| 21. ທ່ານ ນ ພຸດສະຫວັດ ອົ້ມວໍລະວົງ | ຄະນະພະຍາບານ ໂຮງໝໍແຂວງສາລະວັນ |
| 22. ທ່ານ ນ ບົວຈັນ ສີງຄຳ | ວິຊາການ ໂຮງຮຽນສາທາລະນະສຸກ ຊຽງຂວາງ |
| 23. ທ່ານ ນ ວົງເດືອນ ຄຳລີວົງ | ຮອງໜ່ວຍງານພະຍາບານ ໂຮງໝໍແຂວງຊຽງຂວາງ |
| 24. ທ່ານ ນ ຈັນສຸກ ຄຳມີໄຊ | ວິຊາການພະຍາບານ ໂຮງໝໍແຂວງອັດຕະປື |
| 25. ທ່ານ ດຣ ເລກ ສີດາວົງ | ວິຊາການ ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ |
| 26. ທ່ານ ບຸນປະສິດ ຄຳກອງ | ວິຊາການ ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ |
| 27. ທ່ານ ດຣ. ນ ກຽວໂກະ ໂກໂຕະຊິມາດະ | ຫົວໜ້າ ທີ່ປຶກສາໂຄງການ ພຄວປ |
| 28. ທ່ານ ນ ຢູກະ ໂອທາກຸ | ຊ່ຽວຊານ ບໍລິຫານຈັດການທາງການພະຍາບານ |
| 29. ທ່ານ ຄາຊູກິ ມິຢາຊາກິ | ຊ່ຽວຊານ ບໍລິຫານການພະຍາບານ |
| 30. ທ່ານ ນ ສຸພະລັກ ພັນໂນລາດ | ຜູ້ປະສານງານໂຄງການ |
| 31. ທ່ານ ນ ປູເປ້ ແກ້ວວົງດີ | ຜູ້ປະສານງານໂຄງການ |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ** 0940

ກະຊວງສາທາລະນະສຸກ

ເລກທີ__________/ສທ

ນະຄອນຫຼວງວຽງຈັນ,ວັນທີ 21 MAY 2018

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງບຸກຄະລາກອນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ

- ອີງຕາມ ກົດໝາຍວ່າດ້ວຍການປິ່ນປົວ ເລກທີ 58/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສາທາລະນະສຸກ ສະບັບເລກທີ 96/ນຍ, ລົງວັນທີ 9 ມີນາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ເລກທີ 0131/ສທ, ລົງວັນທີ 19 ມັງກອນ 2017;
- ອີງຕາມ ໃບສະເໜີຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ວ່າດ້ວຍການສະເໜີແຕ່ງຕັ້ງຮອງປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 46/ສອປ ແລະ ເລກທີ 45/ສອປ, ລົງວັນທີ 8 ພຶດສະພາ 2018;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

### ລັດຖະມົນຕີ ຕົກລົງ:

**ມາດຕາ 1** ເຫັນດີແຕ່ງຕັ້ງປະທານ ແລະ ຮອງປະທານ ສະພາຄຸ້ມຄອງວິຊາຊີບປິ່ນປົວ ດັ່ງລາຍລະອຽດລຸ່ມນີ້:

| | | |
|---|---|---|
| 1. ທ່ານ ດຣ ປອນເມກ ດາລາລອຍ | ອາດີດລັດຖະມົນຕີກະຊວງສາທາລະນະສຸກ | ເປັນປະທານ; |
| 2. ທ່ານ ດຣ ພູທອນ ວັງກອນວິໄລ | ວ່າການອະທິການບໍດີ ມວສ | ເປັນຮອງປະທານ; |
| 3. ທ່ານ ຮສ ດຣ ບຸນພັກ ໄຊຊະນະສົງຄາມ | ຫົວໜ້າກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ | ເປັນຮອງປະທານ; |
| 4. ທ່ານ ດຣ ນ ແສງຈ້ອຍ ປັນຍາວົງ | ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຮອງປະທານ; |
| 5. ທ່ານ ສຈ ດຣ ຈັນເພັງ ທຳມະວົງ | ພະນັກງານບຳນານ | ເປັນຮອງປະທານ; |
| 6. ທ່ານ ຮສ ດຣ ຈັນພິມມາ ວົງສຳພັນ | ພະນັກງານບຳນານ | ເປັນຮອງປະທານ. |

**ມາດຕາ 2** ໃຫ້ບັນດາທ່ານທີ່ຖືກແຕ່ງຕັ້ງເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນຕາມຂໍຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ;

**ມາດຕາ 3** ໃຫ້ຫ້ອງການກະຊວງ, ກົມຈັດຕັ້ງ ແລະ ພະນັກງານ, ກົມປິ່ນປົວ, ການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງຈົ່ງພ້ອມກັນຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ;

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ປ່ຽນແທນມາດຕາ 1 ຂອງຂໍ້ຕົກລົງເລກທີ 0295/ສທ ລົງວັນທີ 17 ກຸມພາ 2017;

**ມາດຕາ 5** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

- ບ່ອນນຳສົ່ງ:

| | |
|---|---|
| 1. ຫ້ອງການກະຊວງສາທາລະນະສຸກ | 1 ສະບັບ |
| 2. ພາກສ່ວນກ່ຽວຂ້ອງບ່ອນລະ | 1 ສະບັບ |
| 3. ບັນດາທ່ານທີ່ຖືກແຕ່ງຕັ້ງທ່ານລະ | 1 ສະບັບ |
| 4. ເກັບຮັກສາໄວ້ | 2 ສະບັບ |

ກະຊວງ ສາທາລະນະສຸກ

ລັດຖະມົນຕີ

ຮສ ດຣ. ບຸນກອງ ສີຫາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0190 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 23 OCT 2019

# ຂໍ້ຕົກລົງ
## ວ່າດ້ວຍການປັບປຸງການແຕ່ງຕັ້ງບຸກຄະລາກອນ
## ຂອງຄະນະກຳມະການວິຊາຊີບປິ່ນປົວ(ບອດ)ການພະຍາບານ ແລະ ຜະດຸງຄັນ
## (Nursing and Midwife Board)

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0131/ສທ, ລົງວັນທີ 09 ມັງກອນ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍການແຕ່ງຕັ້ງບຸກຄະລາກອນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0295/ສທ, ລົງວັນທີ 17 ກຸມພາ 2017;
- ອີງຕາມ ໜັງສືສະເໜີ ຂອງຄະນະກຳມະການວິຊາຊີບປິ່ນປົວ(ບອດ)ການພະຍາບານ ແລະ ຜະດຸງຄັນ ສະບັບເລກທີ 0165/ສວປ.ພບ-ຜຄ, ລົງວັນທີ 21 ຕຸລາ 2019.

### ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

**ມາດຕາ 1** ເຫັນດີ ປັບປຸງການແຕ່ງຕັ້ງບຸກຄະລາກອນຂອງຄະນະກຳມະການວິຊາຊີບປິ່ນປົວ ການພະຍາບານ ແລະ ຜະດຸງຄັນ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ດັ່ງມີລາຍຊື່ລະອຽດ ລຸ່ມນີ້:

| | | | |
|---|---|---|---|
| 1. | ທ່ານ ນ ແພງດີ ອິນທະພານິດ | ກອງເລຂາສະພະຄຸ້ມຄອງວິຊາຊີບປິ່ນປົວ | ຫົວໜ້າ |
| 2. | ທ່ານ ສຸກສະຫວັນ ພັນປະເສີດ | ຄະນະບໍດີ ຄະນະພະຍາບານສາດ, ມວສ | ຮອງ |
| 3. | ທ່ານ ນ ແສງມະນີ ຄຳບຸນເຮືອງ | ຮອງຫົວໜ້າກົມການສຶກສາ ສາທາລະນະສຸກ | ຮອງ |
| 4. | ທ່ານ ນ ມີມາລາ ປະທຸມຊາດ | ຊ່ຽວຊານດ້ານການບໍລິຫານການພະຍາບານ | ຮອງ |
| 5. | ທ່ານ ນ ວຽງສະຫວັນ ສອນສິນໄຊ | ຫົວໜ້າພະແນກພະຍາບານ ແລະ ຜະດຸງຄັນ, ກປຝ | ກຳມະການ |
| 6. | ທ່ານ ປອ. ນ ອານຸສອນ ສີສຸລາດ | ຮອງຄະນະບໍດີ ຄະນະພະຍາບານສາດ, ມວສ | ກຳມະການ |
| 7. | ທ່ານ ນ ຄຳໂພໄຊ ພົມມະທັນສີ | ຫົວໜ້າພາກວິຊາຜະດຸງຄັນ ຄະນະພະຍາບານສາດ, ມວສ | ກຳມະການ |
| 8. | ທ່ານ ນ ອໍລະພົມ ພຸດທະວົງ | ຮອງຫົວໜ້າພະແນກພະຍາບານ ແລະ ຜະດຸງຄັນ, ກປຝ | ກຳມະການ |
| 9. | ທ່ານ ນ ບົວວັນ ປະທຸມທອງ | ຫົວໜ້າພະແນກພະຍາບານ, ໂຮງໝໍມະໂຫສົດ | ກຳມະການ |
| 10. | ທ່ານ ນ ເລີດມະນີ ສີສຸພັນທະວົງ | ຫົວໜ້າພະແນກພະຍາບານ, ໂຮງມິດຕະພາບ | ກຳມະການ |

| | | |
|---|---|---|
| 11. ທ່ານ ນ ຄຳຫຼ້າ ສີອຸດົມ | ຫົວໜ້າພະແນກພະຍາບານ, ໂຮງໝໍເຊດຖາທິຣາດ | ກຳມະການ |
| 12. ທ່ານ ນ ທິບລານີ ຈູມມະນີວົງ | ຫົວໜ້າພະແນກພະຍາບານ, ໂຮງໝໍແມ່ ແລະ ເດັກເກີດໃໝ່ | ກຳມະການ |
| 13. ທ່ານ ນ ບຸນມາລາ ສໍປະເສີດ | ຫົວໜ້າພະແນກພະຍາບານ, ໂຮງໝໍເດັກ | ກຳມະການ |
| 14. ທ່ານ ນ ແນວພະຈັນ ສີຫາວົງ | ວິຊາການພະແນກພະຍາບານ ແລະ ຜະດຸງຄັນ, ກປຝ | ເລຂານຸການ |
| 15. ທ່ານ ນ ມະນີວອນ ສີລິວັນ | ວິຊາການ ກົມການສຶກສາ ສາທາລະນະສຸກ | ເລຂານຸການ |

**ມາດຕາ 2** ໃຫ້ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຕາມສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ຕາມການຊີ້ນຳຂອງປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ.

**ມາດຕາ 3** ໃຫ້ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການວິຊາຊີບປິ່ນປົວການພະຍາບານ-ຜະດຸງຄັນ, ຄະນະກຳມະການວິຊາຊີບປິ່ນປົວການແພດ, ຄະນະກຳມະການວິຊາຊີບປິ່ນປົວດ້ານທັນຕະກຳ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ຊົ່ວຄາວ ຈົນກວ່າຈະມີການປັບປຸງຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງບຸກຄະລາກອນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0295/ສທ, ລົງວັນທີ 17 ກຸມພາ 2017.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ສະພາຄຸ້ມຄອງວິຊາຊີບປິ່ນປົວ

**ດຣ ປອນເມກ ດາລາລອຍ**

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| 1. ຫ້ອງການກະຊວງສາທາລະນະສຸກ | | 01 ສະບັບ |
| 2. ກົມກອງທີ່ກ່ຽວຂ້ອງ | ບ່ອນລະ | 01 ສະບັບ |
| 3. ໂຮງໝໍ ແລະສູນປິ່ນປົວຂັ້ນສູນກາງ | ບ່ອນລະ | 01 ສະບັບ |
| 4. ຄະນະກຳມະການວິຊາຊີບປິ່ນປົວ | ຄະນະລະ | 01 ສະບັບ |
| 5. ຫ້ອງການ ມວສ | | 01 ສະບັບ |
| 6. ຄະນະພະຍາບານສາດ ມວສ | | 01 ສະບັບ |
| 7. ປະທານ ແລະ ຮອງປະທານ ສວປ | ທ່ານລະ | 01 ສະບັບ |
| 8. ບັນດາທ່ານທີ່ຖືກແຕ່ງຕັ້ງ | ທ່ານລະ | 01 ສະບັບ |
| 9. ເກັບຮັກສາໄວ້ | | 02 ສະບັບ |